**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 33 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 29 / 11 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປະກັນໄພ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປະກັນໄພ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 29 ພະຈິກ 2019.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປະກັນໄພ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ...030.../ປປທ

ນະຄອນຫຼວງວຽງຈັນ, ວັນທີ...10 ມັງກອນ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປະກັນໄພ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 33/ສພຊ, ລົງວັນທີ 29 ພະຈິກ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປະກັນໄພ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 35/ຄປຈ, ລົງວັນທີ 16 ທັນວາ 2019.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການປະກັນໄພ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 78 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 29 ພະຈິກ 2019

# ກົດໝາຍ
# ວ່າດ້ວຍການປະກັນໄພ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານປະກັນໄພ ເພື່ອໃຫ້ດຳເນີນ ຖືກຕ້ອງ, ມີປະສິດທິພາບ, ປະສິດທິຜົນ, ໝັ້ນຄົງ ແລະ ປອດໄພ, ຮັບປະກັນໃຫ້ວຽກງານດັ່ງກ່າວ ມີຄວາມເຕີບໃຫຍ່ເຂັ້ມແຂງ, ທັນສະໄໝ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ປະກັນໄພ, ຜູ້ຊື້ປະກັນໄພ, ຫຼຸດຜ່ອນຄວາມສ່ຽງຕໍ່ລະບົບການເງິນແຫ່ງຊາດ, ຊຸກຍູ້ໃຫ້ ສັງຄົມ ແລະ ປະຊາຊົນ ເຂົ້າໃນການປະກັນໄພ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 (ປັບປຸງ) ການປະກັນໄພ

ການປະກັນໄພ ແມ່ນ ການບໍລິຫານຄວາມສ່ຽງ ທີ່ອາດຈະເກີດຂຶ້ນກັບ ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ທີ່ໄດ້ຈ່າຍຄ່າປະກັນໄພ ຊຶ່ງຜູ້ປະກັນໄພຕ້ອງຈ່າຍສິນປະກັນໄພ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາປະກັນໄພ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ປະກັນໄພ ໝາຍເຖິງ ບໍລິສັດປະກັນໄພ ແລະ ບໍລິສັດປະກັນໄພຕໍ່ ຊຶ່ງແມ່ນສະຖາບັນການເງິນຮູບແບບໜຶ່ງ ທີ່ຖືກສ້າງຕັ້ງຂຶ້ນ ແລະ ດຳເນີນທຸລະກິດ ໂດຍສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ;

2. **ຜູ້ຊື້ປະກັນໄພ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຮັດສັນຍາປະກັນໄພກັບຜູ້ປະກັນໄພ ແລະ ຈ່າຍຄ່າປະກັນໄພ ຕາມເງື່ອນໄຂການສັນຍາ, ຜູ້ຊື້ປະກັນໄພ ອາດແມ່ນຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ;

3. **ຜູ້ໄດ້ຮັບການປະກັນໄພ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຄວາມສ່ຽງຕໍ່ ຊັບສິນ, ຄວາມຮັບຜິດຊອບທາງແພ່ງ ຫຼື ຊີວິດ ທີ່ມາເຮັດປະກັນໄພ ໂດຍຖືກຕ້ອງ ແລະ ສອດຄ່ອງກັບສັນຍາປະກັນໄພ, ຜູ້ໄດ້ຮັບການປະກັນໄພ ອາດແມ່ນຜູ້ໄດ້ຮັບຜົນປະໂຫຍດ;

4. **ຜູ້ໄດ້ຮັບຜົນປະໂຫຍດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກເລືອກໂດຍຜູ້ຊື້ປະກັນໄພ ເພື່ອຮັບເອົາສິນປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ;

5. **ສັນຍາປະກັນໄພສ່ວນບຸກຄົນ** ໝາຍເຖິງ ສັນຍາປະກັນຄວາມສ່ຽງຕໍ່ຊີວິດ, ສຸຂະພາບ ແລະ ອຸປະຕິເຫດຕໍ່ຮ່າງກາຍ;

6. **ສັນຍາປະກັນໄພຊັບສິນ** ໝາຍເຖິງ ສັນຍາປະກັນໄພຄວາມສ່ຽງຕໍ່ຊັບສິນ ທີ່ນຳໄປປະກັນໄພ;

7. **ສັນຍາປະກັນໄພຄວາມຮັບຜິດຊອບທາງແພ່ງ** ໝາຍເຖິງ ສັນຍາປະກັນໄພທີ່ເປົ້າໝາຍແມ່ນຄວາມຮັບຜິດຊອບຂອງຜູ້ປະກັນໄພ ຕໍ່ບຸກຄົນທີສາມ ທີ່ໄດ້ຮັບຄວາມເສຍຫາຍຈາກ ຜູ້ຊື້ປະກັນໄພ ໃນໄລຍະສັນຍາປະກັນໄພ;

8. **ຄ່າປະກັນໄພ** ໝາຍເຖິງ ຈຳນວນເງິນທີ່ຜູ້ຊື້ປະກັນໄພ ຕ້ອງຈ່າຍໃຫ້ບໍລິສັດປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ;

9. **ສິນປະກັນໄພ** ໝາຍເຖິງ ມູນຄ່າທົດແທນຄວາມເສຍຫາຍ ຊຶ່ງຜູ້ປະກັນໄພ ຕ້ອງຊໍາລະໃຫ້ແກ່ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ;

10. **ນັກຄະນິດສາດປະກັນໄພ** ໝາຍເຖິງ ຜູ້ທີ່ດໍາລົງຕໍາແໜ່ງທີ່ມີຄຸນວຸດທິ ດ້ານຄະນິດສາດປະກັນໄພ ຊຶ່ງມີຄວາມສ່ຽວຊານ ໃນການຄິດໄລ່ ຄ່າປະກັນໄພ, ສິນປະກັນໄພ, ປະເມີນຄວາມສ່ຽງ ແລະ ຜົນກະທົບທາງການເງິນ ຈາກຄວາມບໍ່ແນ່ນອນໃນປັດຈຸບັນ ແລະ ເຫດການທີ່ອາດຈະເກີດຂຶ້ນໃນອະນາຄົດຂອງຜູ້ປະກັນໄພ;

11. **ບໍລິສັດໃນກຸ່ມ** ໝາຍເຖິງ ບໍລິສັດທີ່ຜູ້ປະກັນໄພຖືຮຸ້ນ ທີ່ສາມາດລົງຄະແນນສຽງໄດ້ແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ;

12. **ການຄວບທຸລະກິດ** ໝາຍເຖິງ ການຕົກລົງຂອງສອງ ຫຼື ຫຼາຍວິສາຫະກິດ ໂດຍໂອນເອົາຊັບສິນ, ສິດ, ພັນທະ ແລະ ຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍທັງໝົດຄວບເຂົ້າກັນ ເພື່ອກາຍເປັນວິສາຫະກິດເດີມໃດໜຶ່ງ ຫຼື ເປັນວິສາຫະກິດໃໝ່;

13. **ການປະກັນໄພຈຸລະພາກ** ໝາຍເຖິງ ການບໍລິການດ້ານການປະກັນໄພ ຊຶ່ງຕອບສະໜອງຄວາມຕ້ອງການ ໃນການປະກັນຄວາມສ່ຽງໃຫ້ແກ່ປະຊາຊົນ ທີ່ມີລາຍຮັບຕໍ່າ, ຜູ້ດ້ອຍໂອກາດ, ຜູ້ຢູ່ຫ່າງໄກສອກຫຼີກ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານປະກັນໄພ**

ລັດ ຊຸກຍູ້ ສົ່ງເສີມ ວຽກງານປະກັນໄພ ດ້ວຍການອອກນິຕິກຳ, ສະໜອງຂໍ້ມູນ ຂ່າວສານ ແລະ ຄວາມສະດວກອື່ນ ເພື່ອພັດທະນາວຽກງານປະກັນໄພ ໃຫ້ທັນສະໄໝ, ເຕີບໃຫຍ່, ເຂັ້ມແຂງ, ໝັ້ນຄົງ ແລະ ເຂົ້າເຖິງສັງຄົມ ຢ່າງທົ່ວເຖິງ.

ລັດ ໃຫ້ຄວາມສຳຄັນ ແລະ ສົ່ງເສີມ ການດຳເນີນທຸລະກິດປະກັນໄພ ກ່ຽວກັບການປະກັນຊີວິດ, ການປະກັນໄພຈຸລະພາກ, ການປະກັນໄພທາງດ້ານກະສິກຳ, ການປະກັນໄພປ່າໄມ້, ການປະກັນໄພການສັກລຽງ ແລະ ການປະກັນໄພອື່ນ ທີ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ຜູ້ຊື້ປະກັນໄພ, ຜູ້ປະກັນໄພ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງ ໂດຍຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານປະກັນໄພ**

ການເຄື່ອນໄຫວວຽກງານປະກັນໄພ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັກສາຄວາມໝັ້ນຄົງ ແລະ ຄວາມປອດໄພ ຂອງວຽກງານປະກັນໄພ ແລະ ລະບົບການເງິນແຫ່ງຊາດ;
4. ຮັບປະກັນການຄຸ້ມຄອງຄວາມສ່ຽງ ແລະ ຄວາມສາມາດໃນການຊຳລະໜີ້;
5. ຮັບປະກັນ ຄວາມຍຸຕິທຳ, ຖືກຕ້ອງ, ຄົບຖ້ວນ, ວ່ອງໄວ, ທັນການ, ໂປ່ງໃສ ແລະ ສາມາດກວດສອບໄດ້;
6. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານປະກັນໄພ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະກັນໄພ ດ້ວຍການແລກປ່ຽນບົດຮຽນ ທາງດ້ານເຕັກນິກ, ວິຊາການ ແລະ ຂໍ້ມູນ ຂ່າວສານ, ການພັດທະນາຊັບພະຍາກອນມະນຸດ ເພື່ອພັດທະນາວຽກງານດັ່ງກ່າວ, ປະຕິບັດຕາມ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II

## ການປະກັນໄພ ແລະ ການປະກັນໄພຕໍ່

**ມາດຕາ 8 (ປັບປຸງ) ປະເພດການປະກັນໄພ**

ການປະກັນໄພ ມີ ສອງ ປະເພດ ດັ່ງນີ້:

1. ການປະກັນຊີວິດ;
2. ການປະກັນໄພທົ່ວໄປ.

ການປະກັນໄພ ແຕ່ລະປະເພດ ຍັງມີການປະກັນໄພຕໍ່.

## ໝວດທີ 1
## ການປະກັນຊີວິດ

**ມາດຕາ 9 (ປັບປຸງ) ການປະກັນຊີວິດ**

ການປະກັນຊີວິດ ແມ່ນ ການປະກັນໄພ ທີ່ຄໍ້າປະກັນຄວາມສ່ຽງຕໍ່ຊີວິດຂອງ ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຕະຫຼອດຊີວິດ ຫຼື ຕາມເວລາທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 10 (ໃໝ່) ກຸ່ມຜະລິດຕະພັນປະກັນຊີວິດ**

ຜະລິດຕະພັນປະກັນຊີວິດ ມີ ສາມກຸ່ມ ໂດຍແຍກຕາມຄຸນລັກສະນະຂອງການປະກັນຊີວິດ ດັ່ງນີ້:

1. ຜະລິດຕະພັນປະກັນຊີວິດ ທີ່ບໍ່ໃຫ້ເງິນປັນຜົນ ຊຶ່ງແມ່ນການປະກັນຊີວິດທີ່ຜູ້ຊື້ປະກັນໄພ ໄດ້ຮັບການຄຸ້ມຄອງຊີວິດຕາມສັນຍາ ແຕ່ຈະບໍ່ໄດ້ຮັບເງິນປັນຜົນຈາກການດຳເນີນທຸລະກິດຂອງບໍລິສັດປະກັນຊີວິດ;

2. ຜະລິດຕະພັນປະກັນຊີວິດ ທີ່ໃຫ້ເງິນປັນຜົນ ຊຶ່ງແມ່ນການປະກັນຊີວິດທີ່ຜູ້ຊື້ປະກັນໄພ ໄດ້ຮັບ ທັງການຄຸ້ມຄອງຊີວິດ ແລະ ເງິນປັນຜົນຈາກການດຳເນີນທຸລະກິດຂອງບໍລິສັດປະກັນຊີວິດ ຕາມກຳນົດເວລາ ແລະ ຈຳນວນເງິນ ທີ່ໄດ້ກຳນົດໄວ້ໃນສັນຍາປະກັນຊີວິດ;

3. ຜະລິດຕະພັນປະກັນຊີວິດ ຄວບການລົງທຶນ ຊຶ່ງແມ່ນການປະກັນຊີວິດທີ່ໃຫ້ການຄຸ້ມຄອງຊີວິດ ແລະ ນຳເອົາຄ່າປະກັນໄພສ່ວນໃດໜຶ່ງໄປລົງທຶນ ໂດຍຜູ້ຊື້ປະກັນໄພ ສາມາດເລືອກຊ່ອງທາງການລົງທຶນໄດ້ ຕາມນະໂຍບາຍຂອງບໍລິສັດປະກັນຊີວິດ ກຳນົດໄວ້.

**ມາດຕາ 11 (ປັບປຸງ) ຮູບແບບຂອງກຸ່ມຜະລິດຕະພັນປະກັນຊີວິດ**

ແຕ່ລະກຸ່ມຜະລິດຕະພັນປະກັນຊີວິດ ອາດມີຮູບແບບຜະລິດຕະພັນ ດັ່ງນີ້:

1. ການປະກັນຊີວິດຕະຫຼອດຊີບ ຊຶ່ງແມ່ນການປະກັນຄວາມສ່ຽງຕະຫຼອດຊີວິດຂອງຜູ້ໄດ້ຮັບການປະກັນໄພ ໃນເວລາເສຍຊີວິດ, ບໍລິສັດປະກັນຊີວິດ ຕ້ອງຈ່າຍສິນປະກັນໄພໃຫ້ຜູ້ໄດ້ຮັບຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນຊີວິດ;

2. ການປະກັນຊີວິດແບບມີກຳນົດເວລາ ຊຶ່ງແມ່ນການປະກັນຄວາມສ່ຽງຕໍ່ຊີວິດຂອງຜູ້ໄດ້ຮັບການປະກັນໄພຕາມກຳນົດເວລາໃດໜຶ່ງ, ບໍລິສັດປະກັນຊີວິດ ຕ້ອງຈ່າຍສິນປະກັນໄພໃຫ້ຜູ້ໄດ້ຮັບຜົນປະໂຫຍດ ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຫາກເສຍຊີວິດ ຕາມໄລຍະເວລາທີ່ໄດ້ກຳນົດໄວ້ໃນສັນຍາປະກັນຊີວິດ;

3. ການປະກັນຊີວິດສະສົມຊັບ ຊຶ່ງແມ່ນການປະກັນຄວາມສ່ຽງຕໍ່ຊີວິດຂອງຜູ້ໄດ້ຮັບການປະກັນໄພໃນເວລາເສຍຊີວິດ ຫຼື ມີຊີວິດຢູ່ຄົບ ຕາມກຳນົດເວລາໃນສັນຍາ, ບໍລິສັດປະກັນຊີວິດຕ້ອງຈ່າຍສິນປະກັນໄພໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຫາກເສຍຊີວິດ ພາຍໃນເວລາທີ່ຕົກລົງກັນໃນສັນຍາປະກັນຊີວິດ ຫຼື ຕ້ອງຈ່າຍສິນປະກັນໄພ ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພ ຫາກມີຊີວິດຢູ່ ເມື່ອຄົບຕາມກຳນົດເວລາໃນສັນຍາ;

4. ການປະກັນຊີວິດແບບໄດ້ເງິນຫຼັງຮັບບຳນານ ຊຶ່ງແມ່ນການປະກັນຄວາມສ່ຽງຕໍ່ຊີວິດຂອງຜູ້ໄດ້ຮັບການປະກັນໄພ ໃນເວລາເສຍຊີວິດກ່ອນອາຍຸບຳນານ ຫຼື ມີຊີວິດຢູ່ຄົບອາຍຸບຳນານ, ບໍລິສັດປະກັນຊີວິດ ຕ້ອງຈ່າຍສິນປະກັນໄພໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຫາກເສຍຊີວິດກ່ອນອາຍຸບຳນານ ຫຼື ຕ້ອງຈ່າຍສິນປະກັນໄພ ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພ ຫາກມີຊີວິດຢູ່ ເມື່ອຄົບອາຍຸບຳນານ;

5. ຮູບແບບການປະກັນຊີວິດອື່ນ ທີ່ຮັບຮອງໂດຍກະຊວງການເງິນ.

## ໝວດທີ 2
## ການປະກັນໄພທົ່ວໄປ

**ມາດຕາ 12 (ປັບປຸງ) ການປະກັນໄພທົ່ວໄປ**

ການປະກັນໄພທົ່ວໄປ ແມ່ນ ການປະກັນໄພ ທີ່ຄ້ຳປະກັນຄວາມເສຍຫາຍຕໍ່ຊັບສິນ, ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ແລະ ການປະກັນໄພອື່ນ ທີ່ບໍ່ແມ່ນການປະກັນຊີວິດ.

ການປະກັນໄພທົ່ວໄປ ມີ ດັ່ງນີ້:

1. ການປະກັນໄພທົ່ວໄປແບບສະໝັກໃຈ;
2. ການປະກັນໄພທົ່ວໄປແບບບັງຄັບ.

**ມາດຕາ 13 (ປັບປຸງ) ການປະກັນໄພທົ່ວໄປແບບສະໝັກໃຈ**

ການປະກັນໄພທົ່ວໄປແບບສະໝັກໃຈ ແມ່ນ ການທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສະໝັກໃຈຊື້ປະກັນໄພ ໂດຍມີສິດເລືອກເອົາປະເພດ, ຂອບເຂດ ຫຼື ວົງເງິນປະກັນໄພ ຂອງການຄຸ້ມຄອງຕາມແບບປະກັນໄພທີ່ຜູ້ປະກັນໄພວາງອອກ.

**ມາດຕາ 14 (ປັບປຸງ) ການປະກັນໄພທົ່ວໄປແບບບັງຄັບ**

ການປະກັນໄພທົ່ວໄປແບບບັງຄັບ ແມ່ນ ການປະກັນໄພທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພູມລຳເນົາ ຫຼື ບໍ່ມີພູມລຳເນົາ ຢູ່ ສປປ ລາວ ຕ້ອງຊື້ເພື່ອຄຸ້ມຄອງຄວາມເສຍຫາຍທາງແພ່ງຕໍ່ ຊີວິດ ແລະ ຊັບສິນຂອງບຸກຄົນທີສາມ.

ລາຍການທີ່ຕ້ອງຊື້ການປະກັນໄພທົ່ວໄປແບບບັງຄັບ ມີ ດັ່ງນີ້:

1. ພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ການເດີນທາງບົກ, ທາງນ້ຳ ແລະ ທາງອາກາດ;
2. ໂຮງແຮມ, ເຮືອນພັກ, ສະຖານທີ່ບັນເທີງ, ຜັບຕະຄານ, ຮ້ານອາຫານ, ກິດຈະການຕະຫຼາດ;
3. ການຂົນສົ່ງ ສິນຄ້າ ແລະ ຜູ້ໂດຍສານ ທາງບົກ, ທາງນ້ຳ ແລະ ທາງອາກາດ;
4. ສະຖານທີ່ກໍ່ສ້າງ;
5. ໂຄງການເຂື່ອນໄຟຟ້າ;
6. ສາງເກັບມ້ຽນສິນຄ້າ, ສາງທາດເຄມີ, ສາງນ້ຳມັນເຊື້ອໄຟ, ສາງທາດລະເບີດ;
7. ໂຮງຈັກ ໂຮງງານ;
8. ສະຖານທີ່ຜະລິດ ແລະ ເກັບມ້ຽນລະເບີດ;
9. ການປະກັນໄພທົ່ວໄປແບບບັງຄັບອື່ນ.

ສຳລັບ ລາຍລະອຽດກ່ຽວກັບການປະກັນໄພທົ່ວໄປແບບບັງຄັບ ທີ່ພົວພັນກັບບຸກຄົນທີສາມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 (ປັບປຸງ) ຮູບແບບຂອງຜະລິດຕະພັນປະກັນໄພທົ່ວໄປ**

ຜະລິດຕະພັນປະກັນໄພທົ່ວໄປ ມີ ຮູບແບບ ດັ່ງນີ້:

1. ການປະກັນໄພລົດ;
2. ການປະກັນໄພການຂົນສົ່ງ;

3. ການປະກັນໄພອັກຄີໄພ;

4. ການປະກັນໄພອື່ນ ເປັນຕົ້ນ ການປະກັນໄພຊັບສິນ, ການປະກັນໄພການກໍ່ສ້າງ, ການປະກັນໄພອຸບປະຕິເຫດ, ການປະກັນສຸຂະພາບ, ການປະກັນໄພຄວາມສ່ຽງດ້ານການເງິນ ແລະ ສິນເຊື່ອ, ການປະກັນໄພຄວາມເສຍຫາຍຂອງທຸລະກິດ, ການປະກັນໄພທາງດ້ານກະສິກຳ, ການປະກັນໄພປ່າໄມ້, ການປະກັນໄພສັດລ້ຽງ, ການປະກັນໄພອຸບັດຕິໄພ ແລະ ໄພພິບັດ.

## ໝວດທີ 3
## ການປະກັນໄພຕໍ່

**ມາດຕາ 16 (ປັບປຸງ) ການປະກັນໄພຕໍ່**

ການປະກັນໄພຕໍ່ ແມ່ນ ການແບ່ງສ່ວນຄວາມສ່ຽງ ທີ່ບໍລິສັດປະກັນໄພຮັບມາ ເພື່ອເອົາໄປປະກັນໄພຕໍ່ ນຳບໍລິສັດປະກັນໄພອື່ນ ຢູ່ພາຍໃນ ຫຼື ຕ່າງປະເທດ ໂດຍສອດຄ່ອງກັບຫຼັກການດຳເນີນທຸລະກິດປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ບໍລິສັດປະກັນໄພ ຕ້ອງຮັບຜິດຊອບໃນການຈ່າຍສິນປະກັນໄພໃນສ່ວນທີ່ນຳໄປປະກັນໄພຕໍ່ ໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ໃນກໍລະນີບໍລິສັດປະກັນໄພຕໍ່ ຫາກບໍ່ມີຄວາມສາມາດທົດແທນໄດ້.

**ມາດຕາ 17 (ປັບປຸງ) ວິທີການປະກັນໄພຕໍ່**

ການປະກັນໄພຕໍ່ ມີ ວິທີການ ດັ່ງນີ້:

1. ສາມາດດຳເນີນການປະກັນໄພຕໍ່ ກັບໜຶ່ງ ຫຼື ຫຼາຍບໍລິສັດປະກັນໄພກໍໄດ້ ໂດຍແບ່ງຄວາມສ່ຽງ ທີ່ໄດ້ປະກັນໄພແລ້ວນັ້ນ ໃຫ້ບໍລິສັດທີ່ຮັບປະກັນໄພຕໍ່;

2. ສາມາດດຳເນີນການປະກັນໄພຕໍ່ ສ່ວນໃດສ່ວນໜຶ່ງ ຂອງຄວາມສ່ຽງທີ່ໄດ້ປະກັນໄພແລ້ວ.

**ມາດຕາ 18 ຫຼັກການ ການປະກັນໄພຕໍ່**

ຜູ້ປະກັນໄພ ສາມາດປະກັນໄພຕໍ່ ກັບຜູ້ປະກັນໄພຕໍ່ຢູ່ ພາຍໃນ ຫຼື ຕ່າງປະເທດ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ແບ່ງຄວາມຮັບຜິດຊອບ ໃນການທົດແທນຄ່າເສຍຫາຍທີ່ໄດ້ຮັບການປະກັນໄພ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ສາກົນ. ຜູ້ປະກັນໄພ ຕ້ອງສະໜອງຂໍ້ມູນກ່ຽວກັບສັນຍາປະກັນໄພຕໍ່ ແລະ ຂໍ້ມູນອື່ນ ໃຫ້ກະຊວງການເງິນ ເພື່ອຕິດຕາມ, ຄຸ້ມຄອງ ແລະ ກວດກາ.

**ມາດຕາ 19 (ປັບປຸງ) ເງື່ອນໄຂການປະກັນໄພຕໍ່**

ການປະກັນໄພຕໍ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄວາມເປັນໄປໄດ້ທາງດ້ານເຕັກນິກໃນຂົງເຂດທຸລະກິດຂອງ ຜູ້ປະກັນໄພຕໍ່ ທີ່ໄດ້ຮັບອະນຸຍາດ;

2. ສອດຄ່ອງກັບແຜນການດຳເນີນທຸລະກິດຂອງຜູ້ປະກັນໄພຕໍ່;

3. ໄດ້ຮັບຄວາມເຊື່ອໝັ້ນໃນຂົງເຂດປະກັນໄພ ໃນຕະຫຼາດປະກັນໄພ ພາຍໃນປະເທດ, ຕ່າງປະເທດ, ພາກພື້ນ ແລະ ສາກົນ, ມີຄວາມໝັ້ນຄົງທາງດ້ານການເງິນ ແລະ ມີປະສົບການກ່ຽວກັບການປະກັນໄພຕໍ່.

ໃນກໍລະນີ ກະຊວງການເງິນ ກວດກາພົບເຫັນການປະກັນໄພຕໍ່ ບໍ່ມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້ ມີສິດແຈ້ງເປັນລາຍລັກອັກສອນໃຫ້ຍົກເລີກ ຫຼື ສະເໜີໃຫ້ດັດແກ້ການປະກັນໄພຕໍ່ ຫຼື ບໍ່ອະນຸຍາດໃຫ້ເຮັດການປະກັນໄພຕໍ່.

**ມາດຕາ 20 (ປັບປຸງ) ຄວາມຮັບຜິດຊອບກ່ຽວກັບການປະກັນໄພຕໍ່**

ຜູ້ປະກັນໄພ ມີຄວາມຮັບຜິດຊອບຕໍ່ຜູ້ຊື້ປະກັນໄພ ຕາມສັນຍາປະກັນໄພ ລວມທັງກໍລະນີເອົາຮຸ້ນສ່ວນໄປປະກັນໄພຕໍ່.

ບໍລິສັດປະກັນໄພຕໍ່ ບໍ່ສາມາດຮຽກຮ້ອງ ໃຫ້ຜູ້ຊື້ປະກັນໄພຈ່າຍຄ່າປະກັນໄພໂດຍກົງໃຫ້ຕົນເອງ, ເວັ້ນເສຍແຕ່ສັນຍາ ຫາກໄດ້ກໍານົດໄວ້ເປັນຢ່າງອື່ນ.

ຜູ້ຊື້ປະກັນໄພ ບໍ່ສາມາດຮຽກຮ້ອງໃຫ້ບໍລິສັດປະກັນໄພຕໍ່ ຈ່າຍສິນປະກັນໄພໃຫ້ຕົນເອງ, ເວັ້ນເສຍແຕ່ສັນຍາ ຫາກໄດ້ກໍານົດໄວ້ເປັນຢ່າງອື່ນ.

## ພາກທີ III
## ສັນຍາປະກັນໄພ

**ມາດຕາ 21 ສັນຍາປະກັນໄພ**

ສັນຍາປະກັນໄພ ແມ່ນ ການຕົກລົງລະຫວ່າງ ຜູ້ຊື້ປະກັນໄພກັບຜູ້ປະກັນໄພ ຊຶ່ງຜູ້ຊື້ປະກັນໄພຕ້ອງຈ່າຍຄ່າປະກັນໄພ ແລະ ຜູ້ປະກັນໄພ ຕ້ອງຈ່າຍສິນປະກັນໄພ ໃຫ້ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ໃນກໍລະນີເກີດຄວາມເສຍຫາຍ.

**ມາດຕາ 22 (ໃໝ່) ປະເພດສັນຍາປະກັນໄພ**

ສັນຍາປະກັນໄພ ມີ ສາມ ປະເພດ ດັ່ງນີ້:

1. ສັນຍາປະກັນໄພ ສ່ວນບຸກຄົນ;
2. ສັນຍາປະກັນໄພ ຊັບສິນ;
3. ສັນຍາປະກັນໄພຄວາມຮັບຜິດຊອບທາງແພ່ງ.

ສັນຍາປະກັນໄພແຕ່ລະປະເພດ ທີ່ມີເປົ້າໝາຍປະກັນໄພ ຢູ່ ສປປ ລາວ ຕ້ອງເຮັດກັບຜູ້ປະກັນໄພ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດໍາເນີນທຸລະກິດຢູ່ ສປປ ລາວ ເທົ່ານັ້ນ.

ສໍາລັບລະບຽບການກ່ຽວກັບສັນຍາປະກັນໄພແຕ່ລະປະເພດນັ້ນ ກະຊວງການເງິນເປັນຜູ້ກໍານົດ.

**ມາດຕາ 23 (ປັບປຸງ) ເນື້ອໃນສັນຍາປະກັນໄພ**

ສັນຍາປະກັນໄພ ມີເນື້ອໃນ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ທີ່ຢູ່ ຂອງຄູ່ສັນຍາ;
2. ກໍານົດຕົວບຸກຄົນ ຫຼື ຊັບສົມບັດ ທີ່ເອົາມາປະກັນໄພ;
3. ປະເພດຄວາມສ່ຽງທີ່ຕ້ອງການໃຫ້ຄຸ້ມຄອງ;
4. ວັນ ແລະ ເວລາ ເລີ່ມຕົ້ນການຄຸ້ມຄອງ ຄວາມສ່ຽງ ແລະ ອາຍຸຂອງສັນຍາ;
5. ວົງເງິນປະກັນໄພ;
6. ຄ່າປະກັນໄພ ແລະ ວິທີການຈ່າຍ;
7. ວິທີການ ແລະ ເງື່ອນໄຂໃນການແຈ້ງ ກ່ຽວກັບຄວາມເສຍຫາຍທີ່ໄດ້ເກີດຂຶ້ນ;

8. ເງື່ອນໄຂ ຂອງການເປັນໂມຄະຂອງສັນຍາປະກັນໄພ, ການເສຍສິດ ແລະ ການຢຸດເຊົາສັນຍາປະກັນໄພ ກ່ອນກຳນົດເວລາ;

9. ວິທີການແກ້ໄຂຂໍ້ຂັດແຍ່ງ;

10. ເນື້ອໃນອື່ນ ຕາມການຕົກລົງຂອງຄູ່ສັນຍາ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 24 (ປັບປຸງ) ຄວາມສັກສິດຂອງສັນຍາປະກັນໄພ**

ສັນຍາປະກັນໄພ ຈະມີຄວາມສັກສິດໄດ້ ກໍຕໍ່ເມື່ອຜູ້ປະກັນໄພໄດ້ຮັບຄຳຮ້ອງຂໍການປະກັນໄພ ຈາກຜູ້ຊື້ປະກັນໄພ, ໄດ້ຮັບການສະໜອງຂໍ້ມູນທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ໄດ້ມີການຈ່າຍຄ່າປະກັນໄພຕາມການຕົກລົງກັນໃນສັນຍາ.

**ມາດຕາ 25 ກຳນົດເວລາຂອງສັນຍາປະກັນໄພ**

ສັນຍາປະກັນໄພແຕ່ລະປະເພດ ຕ້ອງມີກຳນົດເວລາທີ່ແນ່ນອນ ແລະ ສາມາດຕໍ່ໄດ້ ບົນພື້ນຖານການຕົກລົງຂອງຄູ່ສັນຍາ.

**ມາດຕາ 26 ການດັດແກ້ສັນຍາປະກັນໄພ**

ສັນຍາປະກັນໄພ ຈະດັດແກ້ໄດ້ ກໍຕໍ່ເມື່ອໄດ້ຮັບການຕົກລົງເຫັນດີລະຫວ່າງຄູ່ສັນຍາ. ການດັດແກ້ຈະມີຜົນໃຊ້ບັງຄັບ ກໍຕໍ່ເມື່ອຜູ້ປະກັນໄພໄດ້ບັນທຶກການດັດແກ້ນັ້ນ ເຂົ້າໃນສັນຍາ ຫຼື ອອກເອກະສານຄັດຕິດໃຫ້ແລ້ວເທົ່ານັ້ນ.

**ມາດຕາ 27 (ໃໝ່) ການໂຈະ ຫຼື ການຍົກເລີກ ສັນຍາປະກັນໄພ**

ຜູ້ປະກັນໄພ ມີ ສິດໂຈະ ຫຼື ຍົກເລີກ ສັນຍາປະກັນໄພ ຖ້າຫາກຜູ້ຊື້ປະກັນໄພ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມຈິງໂດຍເຈດຕະນາ ເພື່ອເຮັດສັນຍາປະກັນໄພ ຫຼື ຮັບເອົາການຈ່າຍສິນປະກັນໄພ;

2. ບໍ່ສະໜອງຂໍ້ມູນໃຫ້ຜູ້ປະກັນໄພ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້.

ຜູ້ຊື້ປະກັນໄພ ກໍມີສິດໂຈະ ຫຼື ຍົກເລີກ ສັນຍາປະກັນໄພ ໃນກໍລະນີຜູ້ປະກັນໄພບໍ່ປະຕິບັດຕາມສັນຍາ.

ນອກຈາກນັ້ນ ການໂຈະ ຫຼື ການຍົກເລີກ ສັນຍາປະກັນໄພ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ.

**ມາດຕາ 28 (ປັບປຸງ) ການປ່ຽນແປງລະດັບຄວາມສ່ຽງ**

ຖ້າຫາກມີການປ່ຽນແປງລະດັບ ຫຼື ປັດໄຈຄວາມສ່ຽງ ຊຶ່ງເຮັດໃຫ້ພື້ນຖານການຄິດໄລ່ຄ່າປະກັນໄພຫຼຸດລົງ, ຜູ້ຊື້ປະກັນໄພ ມີສິດຮ້ອງຂໍໃຫ້ຜູ້ປະກັນໄພຫຼຸດຄ່າປະກັນໄພ ສຳລັບໄລຍະເວລາ ຂອງສັນຍາປະກັນໄພທີ່ຍັງເຫຼືອ. ຖ້າຜູ້ປະກັນໄພ ຫາກບໍ່ຍອມຫຼຸດຄ່າປະກັນໄພນັ້ນ ຜູ້ຊື້ປະກັນໄພມີສິດຍົກເລີກສັນຍາປະກັນໄພ ແຕ່

ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ ພ້ອມທັງສຳເນົາໜັງສືແຈ້ງໃຫ້ກະຊວງການເງິນ.

ຖ້າຫາກມີການປ່ຽນແປງລະດັບ ຫຼື ປັດໃຈຄວາມສ່ຽງ ຊຶ່ງເຮັດໃຫ້ພື້ນຖານການຄິດໄລ່ຄ່າປະກັນໄພເພີ່ມຂຶ້ນ, ຜູ້ປະກັນໄພມີສິດຄິດໄລ່ຄ່າປະກັນໄພຄືນໃໝ່ ສຳລັບໄລຍະເວລາຂອງສັນຍາປະກັນໄພທີ່ຍັງເຫຼືອ. ໃນກໍລະນີຜູ້ຊື້ປະກັນໄພ ຫາກບໍ່ຍອມຈ່າຍຄ່າປະກັນໄພເພີ່ມນັ້ນ ຜູ້ປະກັນໄພ ມີສິດຍົກເລີກສັນຍາປະກັນໄພ ແຕ່ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຊື້ປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ ພ້ອມທັງສຳເນົາໜັງສືແຈ້ງໃຫ້ກະຊວງການເງິນ.

**ມາດຕາ 29 ການສິ້ນສຸດສັນຍາປະກັນໄພ**

ສັນຍາປະກັນໄພ ຈະສິ້ນສຸດລົງໃນກໍລະນີ ໃດໜຶ່ງ ດັ່ງນີ້:

1. ສັນຍາປະກັນໄພ ໝົດອາຍຸໂດຍບໍ່ມີການຕໍ່ເວລາ;
2. ຄູ່ສັນຍາຝ່າຍໃດໜຶ່ງ ໄດ້ລະເມີດສັນຍາປະກັນໄພ ຫຼື ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ຕົກລົງກັນ;
3. ຊັບສິນທີ່ເອົາໄປປະກັນໄພນັ້ນ ຖືກສູນຫາຍ ຫຼື ຖືກທຳລາຍ;
4. ຄູ່ສັນຍາ ຕົກລົງຍົກເລີກສັນຍາປະກັນໄພດ້ວຍຄວາມສະໝັກໃຈ;
5. ຜູ້ຊື້ປະກັນໄພ ມີການປົກເປືອນ, ປິດບັງ ເລື່ອງສຳຄັນໝາຍປະກັນໄພ ໂດຍເຈດຕະນາ;
6. ສານຕັດສິນ ໃຫ້ສັນຍາປະກັນໄພເປັນໂມຄະ ຫຼື ໃຫ້ຜູ້ປະກັນໄພລົ້ມລະລາຍ.

**ມາດຕາ 30 (ປັບປຸງ) ກຳນົດເວລາການຮ້ອງຂໍສິນປະກັນໄພ**

ການຮ້ອງຂໍສິນປະກັນໄພ ໃຫ້ປະຕິບັດພາຍໃນເວລາ ສາມປີ ນັບແຕ່ວັນເຫດການປະກັນໄພໄດ້ເກີດຂຶ້ນ ໃນກໍລະນີທີ່ບໍ່ໄດ້ກຳນົດເວລາໄວ້ໃນສັນຍາ, ສ່ວນເຫດສຸດວິໄສ ຫຼື ເຫດບັງເອີນນັ້ນ ບໍ່ໃຫ້ຄິດໄລ່ເຂົ້າໃນກຳນົດເວລາການຮ້ອງຂໍສິນປະກັນໄພ.

ໃນກໍລະນີຜູ້ຊື້ປະກັນໄພ ຫາກບໍ່ຮູ້ວັນເກີດເຫດການປະກັນໄພຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ກຳນົດເວລາດັ່ງກ່າວ ໃຫ້ຄິດໄລ່ນັບແຕ່ວັນຜູ້ຊື້ປະກັນໄພໄດ້ຮັບຮູ້ ເປັນຕົ້ນໄປ.

ໃນກໍລະນີບຸກຄົນທີສາມ ຫາກຮ້ອງຂໍໃຫ້ຜູ້ຊື້ປະກັນໄພທົດແທນຄ່າເສຍຫາຍທີ່ຖືກຄຸ້ມກັນຕາມສັນຍາປະກັນໄພ, ກຳນົດເວລາດັ່ງກ່າວ ໃຫ້ຄິດໄລ່ນັບແຕ່ວັນບຸກຄົນທີສາມໄດ້ຮ້ອງຂໍ ເປັນຕົ້ນໄປ.

**ມາດຕາ 31 (ປັບປຸງ) ການຈ່າຍສິນປະກັນໄພ**

ຜູ້ປະກັນໄພຕ້ອງຈ່າຍສິນປະກັນໄພ ໃນກຳນົດເວລາທີ່ໄດ້ຕົກລົງໃນສັນຍາປະກັນໄພ. ໃນກໍລະນີທີ່ບໍ່ໄດ້ກຳນົດເວລາໄວ້ໃນສັນຍານັ້ນ ຜູ້ປະກັນໄພ ຕ້ອງຈ່າຍສິນປະກັນໄພ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບເອກະສານຢ່າງຄົບຖ້ວນ ແລະ ຖືກຕ້ອງ ກ່ຽວກັບການຮ້ອງຂໍເອົາການຈ່າຍສິນປະກັນໄພ.

**ມາດຕາ 32 (ປັບປຸງ) ອາຍຸຄວາມໃນການຮ້ອງຟ້ອງ**

ການຮ້ອງຟ້ອງ ເນື່ອງຈາກຂໍ້ຂັດແຍ່ງກ່ຽວກັບສັນຍາປະກັນໄພ ໃຫ້ດຳເນີນພາຍໃນເວລາ ສາມປີ ນັບແຕ່ວັນຂໍ້ຂັດແຍ່ງເກີດຂຶ້ນ ເປັນຕົ້ນໄປ. ອາຍຸຄວາມ ຈະຖືກໂຈະຕາມກໍລະນີທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ.

**ມາດຕາ 33 (ປັບປຸງ) ການໂອນສັນຍາປະກັນໄພ**

ການໂອນສັນຍາປະກັນໄພ ແມ່ນ ການໂອນຄວາມຮັບຜິດຊອບຂອງສັນຍາປະກັນໄພ ລະຫວ່າງຜູ້ປະກັນໄພດ້ວຍກັນ ຕາມສັນຍາປະກັນໄພທີ່ມີ ໜຶ່ງ ຫຼື ຫຼາຍ ຮູບແບບຜະລິດຕະພັນປະກັນໄພ ບົນພື້ນຖານການຕົກລົງຂອງຜູ້ປະກັນໄພ ແລະ ຜູ້ຊື້ປະກັນໄພ.

**ມາດຕາ 34 (ປັບປຸງ) ເງື່ອນໄຂການໂອນສັນຍາປະກັນໄພ**

ການໂອນສັນຍາປະກັນໄພ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງເປັນຮູບແບບຜະລິດຕະພັນປະກັນໄພດຽວກັນ;

2. ສິດ ແລະ ພັນທະ ທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ ບໍ່ໃຫ້ມີການປ່ຽນແປງກະທົບຕໍ່ອາຍຸຂອງສັນຍາປະກັນໄພ;

3. ຜູ້ປະກັນໄພທີ່ຮັບການໂອນສັນຍາປະກັນໄພ ຕ້ອງມີຄວາມໝັ້ນຄົງທາງດ້ານການເງິນ ແລະ ມີເງິນແຮປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້.

## **ພາກທີ IV**
## **ທຸລະກິດປະກັນໄພ**
### **ໝວດທີ 1**
### **ການດຳເນີນທຸລະກິດປະກັນໄພ**

**ມາດຕາ 35 (ໃໝ່) ທຸລະກິດປະກັນໄພ**

ທຸລະກິດປະກັນໄພ ແມ່ນ ການດຳເນີນກິດຈະການກ່ຽວກັບການປະກັນຊີວິດ ຫຼື ການປະກັນໄພທົ່ວໄປ ລວມທັງການປະກັນໄພຕໍ່.

**ມາດຕາ 36 (ປັບປຸງ) ການຂໍອະນຸຍາດດຳເນີນທຸລະກິດປະກັນໄພ**

ຜູ້ທີ່ມີຈຸດປະສົງ ດຳເນີນທຸລະກິດປະກັນໄພຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ແລະ ຈົດທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດນຳກະຊວງການເງິນ. ກະຊວງການເງິນ ຕ້ອງພິຈາລະນາ ຕາມເວລາທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ໃນການດຳເນີນທຸລະກິດນັ້ນ ອະນຸຍາດໃຫ້ນິຕິບຸກຄົນໜຶ່ງ ດຳເນີນທຸລະກິດປະກັນໄພໄດ້ປະເພດດຽວ ເທົ່ານັ້ນ.

**ມາດຕາ 37 (ປັບປຸງ) ຮູບແບບທຸລະກິດປະກັນໄພ**

ທຸລະກິດປະກັນໄພ ຕ້ອງເຄື່ອນໄຫວໃນຮູບແບບ ບໍລິສັດມະຫາຊົນ ແລະ ບໍລິສັດຈຳກັດ ເທົ່ານັ້ນ.

**ມາດຕາ 38 (ປັບປຸງ) ເງື່ອນໄຂການດຳເນີນທຸລະກິດ ປະກັນໄພ ຫຼື ປະກັນໄພຕໍ່**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດ ປະກັນໄພ ຫຼື ປະກັນໄພຕໍ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີປະຫວັດການດຳເນີນທຸລະກິດທີ່ດີ;

2. ມີທຶນຈົດທະບຽນ ແລະ ເງິນຄໍ້າປະກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ແລະ ມາດຕາ 41 ຂອງກົດໝາຍສະບັບນີ້;

3. ມີຜູ້ບໍລິຫານ ທີ່ມີຄວາມຮູ້, ຄວາມສາມາດ, ຄວາມຊໍານານທາງດ້ານວິຊາຊີບ ແລະ ມີວິຊາສະເພາະ ກ່ຽວກັບການປະກັນໄພ;

4. ມີບຸກຄະລາກອນ ທີ່ມີຄວາມຮູ້, ຄວາມສາມາດດ້ານວິຊາຊີບ, ມີປະກາສະນີຍະບັດ ຫຼື ໃບຢັ້ງຢືນທາງດ້ານການປະກັນໄພ;

5. ມີຫ້ອງການ, ສຳນັກງານ ທີ່ເໝາະສົມໃນການດຳເນີນທຸລະກິດປະກັນໄພ;

6. ບໍ່ເຄີຍຖືກສານຕັດສິນລົງໂທດ ໃນສະຖານການກະທຳຜິດດ້ານເສດຖະກິດ ໂດຍເຈດຕະນາ;

7. ມີແຜນດຳເນີນທຸລະກິດປະກັນໄພ ຫ້າປີ ແລະ ປະຈຳປີ ໂດຍມີຂໍ້ມູນລະອຽດຄົບຖ້ວນ;

8. ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 39 (ປັບປຸງ) ທຶນຈົດທະບຽນ**

ທຶນຈົດທະບຽນ ສຳລັບການດຳເນີນທຸລະກິດປະກັນໄພ ແລະ ປະກັນໄພຕໍ່ ສາມາດປະກອບເປັນເງິນ ແລະ ວັດຖຸຕາມກົດໝາຍວ່າດ້ວຍວິສາຫະກິດ.

ສຳລັບທຶນຈົດທະບຽນຂອງຜູ້ປະກັນໄພ ທີ່ຕ້ອງປະກອບເປັນເງິນ ຕໍ່າສຸດ ດັ່ງນີ້:

1. ສາມສິບ ຕື້ກີບ ສຳລັບບໍລິສັດປະກັນໄພ ທີ່ດຳເນີນທຸລະກິດປະກັນຊີວິດ;
2. ສາມສິບ ຕື້ກີບ ສຳລັບບໍລິສັດປະກັນໄພ ທີ່ດຳເນີນທຸລະກິດປະກັນໄພທົ່ວໄປ;
3. ຫົກສິບ ຕື້ກີບ ສຳລັບບໍລິສັດປະກັນໄພຕໍ່ ທີ່ດຳເນີນທຸລະກິດສຳລັບການປະກັນຊີວິດ;
4. ຫົກສິບ ຕື້ກີບ ສຳລັບບໍລິສັດປະກັນໄພຕໍ່ ທີ່ດຳເນີນທຸລະກິດສຳລັບການປະກັນໄພທົ່ວໄປ.

ໃນໄລຍະເວລາດຳເນີນທຸລະກິດປະກັນໄພ, ຜູ້ປະກັນໄພ ຕ້ອງຮັກສາທຶນຈົດທະບຽນທີ່ປະກອບເປັນເງິນ ບໍ່ໃຫ້ຕໍ່າກວ່າຈຳນວນທີ່ໄດ້ກຳນົດໄວ້ໃນມາດຕານີ້.

ສຳລັບການປະກອບທຶນຈົດທະບຽນທີ່ເປັນວັດຖຸນັ້ນ ຕ້ອງນຳໃຊ້ເຂົ້າໃນການດຳເນີນທຸລະກິດປະກັນໄພ ແລະ ຕ້ອງໄດ້ຮັບການປະເມີນຈາກບໍລິສັດປະເມີນມູນຄ່າຊັບສິນ ຕາມການຕົກລົງເຫັນດີຂອງກະຊວງການເງິນ.

ທຶນທີ່ເປັນວັດຖຸ ປະກອບດ້ວຍ ອະສັງຫາລິມະຊັບ ແລະ/ຫຼື ສັງຫາລິມະຊັບ ທີ່ຢູ່ ສປປ ລາວ.

ລັດຖະບານ ສາມາດປັບປຸງທຶນຈົດທະບຽນ ແຕ່ບໍ່ໃຫ້ຫຼຸດຈຳນວນທີ່ໄດ້ກຳນົດໄວ້ເທິງນີ້.

**ມາດຕາ 40 (ປັບປຸງ) ຄ່າທຳນຽມ ແລະ ຄ່າບໍລິການ**

ຜູ້ດຳເນີນທຸລະກິດປະກັນໄພ ແລະ ກິດຈະການທີ່ຕິດພັນທຸລະກິດປະກັນໄພ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມອັດຕາ ທີ່ກຳນົດໄວ້ໃນລະບຽບການ.

**ມາດຕາ 41 (ປັບປຸງ) ເງິນຄໍ້າປະກັນ**

ກ່ອນຈະເລີ່ມດຳເນີນທຸລະກິດ ຜູ້ປະກັນໄພ ຕ້ອງວາງເງິນຄໍ້າປະກັນໃນອັດຕາ ຊາວສ່ວນຮ້ອຍ ຂອງຈຳນວນທຶນຈົດທະບຽນທີ່ເປັນເງິນຕໍ່າສຸດ ດ້ວຍຮູບແບບເປັນເງິນຝາກໄວ້ນຳທະນາຄານທຸລະກິດ ຫຼື ການຄໍ້າປະກັນໂດຍທະນາຄານທຸລະກິດ ໃດໜຶ່ງ ທີ່ມີຖານະທາງດ້ານການເງິນໝັ້ນຄົງ ແລະ ຕັ້ງຢູ່ ສປປ ລາວ.

ຜູ້ປະກັນໄພ ຈະຖອນ ຫຼື ນຳໃຊ້ເງິນຄໍ້າປະກັນນັ້ນໄດ້ ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກກະຊວງການເງິນ ເທົ່ານັ້ນ.

**ມາດຕາ 42 (ປັບປຸງ) ການນຳໃຊ້ເງິນຄ້ຳປະກັນ**

ຜູ້ປະກັນໄພ ມີສິດນຳໃຊ້ ເງິນຄ້ຳປະກັນ ແລະ ຊັບສິນ ທີ່ຝາກໄວ້ຢູ່ທະນາຄານທຸລະກິດ ເພື່ອຊຳລະສະສາງໜີ້ສິນຂອງຕົນ ເມື່ອມີການຍຸບເລີກ.

ໃນກໍລະນີທີ່ໄດ້ຮັບດອກເບ້ຍຈາກເງິນຄ້ຳປະກັນ ທີ່ຝາກໄວ້ຢູ່ທະນາຄານທຸລະກິດນັ້ນ ຜູ້ປະກັນໄພສາມາດນຳໃຊ້ດອກເບ້ຍຈາກເງິນຄ້ຳປະກັນໄດ້.

**ມາດຕາ 43 (ໃໝ່) ການປ່ຽນແປງການຖືຮຸ້ນ**

ໃນກໍລະນີມີການປ່ຽນແປງການຖືຮຸ້ນ ໃນບໍລິສັດປະກັນໄພ ແລະ ບໍລິສັດປະກັນໄພຕໍ່ ຊຶ່ງເຮັດໃຫ້ມີຜູ້ຖືຮຸ້ນ ນັບແຕ່ ຫ້າສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດ, ບໍລິສັດ ຕ້ອງສະເໜີກະຊວງການເງິນ ເພື່ອພິຈາລະນາ.

**ມາດຕາ 44 (ໃໝ່) ການຄວບທຸລະກິດ**

ຜູ້ປະກັນໄພ ສາມາດຄວບທຸລະກິດກັບຫົວໜ່ວຍທຸລະກິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ເພື່ອສືບຕໍ່ດຳເນີນທຸລະກິດປະກັນໄພ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ ແລະ ການອະນຸຍາດຂອງກະຊວງການເງິນ.

ກ່ອນການພິຈາລະນາອະນຸຍາດການຄວບທຸລະກິດນັ້ນ ກະຊວງການເງິນ ຕ້ອງປະສານສົມທົບກັບຄະນະກຳມະການຄວບຄຸມການແຂ່ງຂັນທາງທຸລະກິດ ເພື່ອອອກແຈ້ງການເຜີຍແຜ່ກ່ຽວກັບການສະເໜີຂໍຄວບທຸລະກິດໃຫ້ສັງຄົມຊາບຜ່ານສື່ມວນຊົນ, ຄ່າໃຊ້ຈ່າຍໃນການເຜີຍແຜ່ດັ່ງກ່າວ ແມ່ນຄວາມຮັບຜິດຊອບຂອງຜູ້ປະກັນໄພທີ່ສະເໜີນັ້ນ. ໃນແຈ້ງການດັ່ງກ່າວ ຕ້ອງກຳນົດວ່າ ຜູ້ຊື້ປະກັນໄພ ຫຼື ຜູ້ມີສ່ວນຮ່ວມສາມາດຄັດຄ້ານການຄວບທຸລະກິດ ພາຍໃນເວລາ ສາມສິບວັນ ຫຼັງຈາກການເຜີຍແຜ່ແຈ້ງການດັ່ງກ່າວ.

ມະຕິ ກ່ຽວກັບການຕົກລົງໃນການຄວບທຸລະກິດດັ່ງກ່າວ ຕ້ອງເປີດເຜີຍສູ່ສັງຄົມຢູ່ທີ່ ກະຊວງການເງິນ ຫຼື ສຳນັກງານໃຫຍ່ຂອງແຕ່ລະຝ່າຍ ທີ່ຈະມີການຄວບທຸລະກິດ ແລະ ອະນຸຍາດໃຫ້ມີການກວດກາຈາກພາຍນອກ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນເຜີຍແຜ່ເອກະສານດັ່ງກ່າວ.

ກະຊວງການເງິນ ຈະອະນຸຍາດໃຫ້ຄວບທຸລະກິດ ກໍຕໍ່ເມື່ອບໍລິສັດທີ່ຈະເກີດຂຶ້ນພາຍຫຼັງການຄວບນັ້ນ ມີເງື່ອນໄຂຖືກຕ້ອງ ແລະ ສອດຄ່ອງກັບເງື່ອນໄຂການດຳເນີນທຸລະກິດປະກັນໄພ ແລະ ປະກັນໄພຕໍ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້.

**ມາດຕາ 45 (ປັບປຸງ) ກິດຈະການທີ່ຕິດພັນທຸລະກິດປະກັນໄພ**

ກິດຈະການທີ່ຕິດພັນທຸລະກິດປະກັນໄພ ມີ ດັ່ງນີ້:

1. ຕົວແທນປະກັນໄພ;
2. ນາຍໜ້າປະກັນໄພ.

ນອກຈາກກິດຈະການ ທີ່ໄດ້ກຳນົດໄວ້ໃນມາດຕານີ້ ຍັງມີກິດຈະການອື່ນ ເຊັ່ນ ການບໍລິຫານຄວາມສ່ຽງ, ການປ້ອງກັນ ແລະ ການຈຳກັດຄວາມເສຍຫາຍ, ການບໍລິການປະເມີນຄວາມເສຍຫາຍ, ການບໍລິຫານກອງທຶນ ແລະ ການລົງທຶນ ກ່ຽວກັບການປະກັນໄພ, ການບໍລິການດ້ານສະຖິຕິສາດປະກັນໄພ.

## ໝວດທີ 2
## ການໂຈະ ແລະ ການຖອນ ໃບອະນຸຍາດດຳເນີນທຸລະກິດປະກັນໄພ

**ມາດຕາ 46 (ໃໝ່) ການໂຈະການດຳເນີນທຸລະກິດປະກັນໄພ**

ການດຳເນີນທຸລະກິດປະກັນໄພ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດທີ່ສົ່ງຜົນກະທົບຕໍ່ ສິດ ແລະ ຜົນປະໂຫຍດຂອງຜູ້ຊື້ປະກັນໄພ ແລະ ສັງຄົມ;
2. ບໍ່ເຄື່ອນໄຫວທຸລະກິດປະກັນໄພ ພາຍໃນເວລາ ໜຶ່ງຮ້ອຍແປດສິບວັນ ນັບແຕ່ວັນໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ;
3. ດຳເນີນທຸລະກິດ ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
4. ຖອນເງິນ ທຶນຈົດທະບຽນ ຫຼື ວາງເງິນຄໍ້າປະກັນຕໍ່າສຸດ ບໍ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ແລະ ມາດຕາ 41 ຂອງກົດໝາຍສະບັບນີ້;
5. ບໍ່ຮັກສາລະດັບຄວາມສາມາດໃນການຊຳລະໜີ້ຂັ້ນຕ່ຳສຸດ ຕາມລະບຽບການ;
6. ບໍ່ປະຕິບັດຕາມລະບຽບການຮັກສາເງິນແຮປະກັນໄພ ທີ່ໄດ້ກຳນົດໄວ້;
7. ສ້າງເອກະສານລາຍງານການເງິນທີ່ບໍ່ສອດຄ່ອງກັບການດຳເນີນທຸລະກິດຕົວຈິງ;
8. ບໍ່ປະຕິບັດຕາມຄຳຕັດສິນຂອງສານ ຫຼື ບໍ່ທົດແທນຄ່າເສຍຫາຍທີ່ເກີດຂຶ້ນ ໂດຍບໍ່ມີເຫດຜົນພຽງພໍ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ;
9. ບໍ່ຮັກສາເງື່ອນໄຂການດຳເນີນທຸລະກິດຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ສາມາດສະເໜີໂຈະການດຳເນີນທຸລະກິດດ້ວຍຄວາມສະໝັກໃຈ ບົນພື້ນຖານການອະນຸຍາດຈາກກະຊວງການເງິນ.

ເມື່ອມີການໂຈະການດຳເນີນທຸລະກິດປະກັນໄພນັ້ນ ກະຊວງການເງິນ ຕ້ອງແຈ້ງກ່ຽວກັບການໂຈະດັ່ງກ່າວ ພ້ອມດ້ວຍເຫດຜົນ ເປັນລາຍລັກອັກສອນໃຫ້ບໍລິສັດດັ່ງກ່າວ.

ສຳລັບຂັ້ນຕອນການໂຈະການດຳເນີນທຸລະກິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 47 (ໃໝ່) ການສັ່ງໃຫ້ໂອນສັນຍາປະກັນໄພ**

ກະຊວງການເງິນ ອາດສັ່ງໃຫ້ໂອນສັນຍາປະກັນໄພ ເມື່ອເຫັນວ່າ:

1. ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ບໍ່ສາມາດຊຳລະໜີ້ສິນ ເມື່ອຄົບກຳນົດເວລາ;
2. ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ບໍ່ຮັກສາລະດັບຄວາມສາມາດໃນການຊຳລະໜີ້ຕາມລະບຽບການ;
3. ການປະຕິບັດໜ້າທີ່ຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ສົ່ງຜົນເສຍຫາຍຕໍ່ ສິດ ແລະ ຜົນປະໂຫຍດຂອງ ຜູ້ຊື້ປະກັນໄພ ຫຼື ເຈົ້າໜີ້.

ໃນກໍລະນີ ມີການໂອນສັນຍາປະກັນໄພ ກະຊວງການເງິນ ຈະສັ່ງໃຫ້ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ນັ້ນ ໂອນສັນຍາບາງສ່ວນ ຫຼື ທັງໝົດ ທີ່ບໍລິສັດຮັບມາ ໃຫ້ບໍລິສັດອື່ນ ຫຼື ເຮັດປະກັນໄພຕໍ່ບາງສ່ວນ ຫຼື ທັງໝົດ ກັບບໍລິສັດປະກັນໄພຕໍ່ ຕາມເງື່ອນໄຂເບື້ອງຕົ້ນທີ່ຜູ້ປະກັນໄພນັ້ນ ໄດ້ເຮັດສັນຍາກັບລູກຄ້າ.

**ມາດຕາ 48 (ໃໝ່) ການເຂົ້າຄວບຄຸມ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່**

ພາຍຫຼັງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ໄດ້ຖືກໂຈະການດໍາເນີນທຸລະກິດປະກັນໄພ ແລະ/ຫຼື ຖືກສັ່ງໃຫ້ໂອນສັນຍາປະກັນໄພ ແຕ່ຍັງບໍ່ສາມາດແກ້ໄຂບັນຫາທີ່ຄົງຄ້າງໄດ້ ກະຊວງການເງິນ ຈະເຂົ້າຄວບຄຸມ ບໍລິສັດດັ່ງກ່າວ.

ໃນການເຂົ້າຄວບຄຸມບໍລິສັດນັ້ນ ກະຊວງການເງິນ ຈະດໍາເນີນການ ດັ່ງນີ້:

1. ເຂົ້າຄວບຄຸມໂດຍກົງ ຫຼື ແຕ່ງຕັ້ງບຸກຄົນທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ເຂົ້າຄວບຄຸມບໍລິສັດ ລວມທັງຊັບສິນຂອງບໍລິສັດນັ້ນ;

2. ແຕ່ງຕັ້ງ ໜຶ່ງ ຫຼື ຫຼາຍ ບຸກຄົນທີ່ມີຄວາມສາມາດຊ່ວຍກະຊວງການເງິນ ໃນການຄຸ້ມຄອງ ບໍລິຫານບໍລິສັດ ໂດຍນໍາໃຊ້ງົບປະມານຂອງບໍລິສັດນັ້ນ;

3. ໂຈະສິດ ແລະ ໜ້າທີ່ຂອງ ສະພາບໍລິຫານ ແລະ ຄະນະອໍານວຍການຂອງບໍລິສັດນັ້ນ.

ການເຂົ້າຄວບຄຸມບໍລິສັດຈະສິ້ນສຸດ ກໍຕໍ່ເມື່ອກະຊວງການເງິນ ແຈ້ງເປັນລາຍລັກອັກສອນວ່າ ບັນຫາທີ່ຄົງຄ້າງນັ້ນ ໄດ້ຮັບການແກ້ໄຂແລ້ວ.

ເມື່ອໄດ້ເຂົ້າຄວບຄຸມແລ້ວ ແຕ່ບໍລິສັດ ຍັງບໍ່ສາມາດຊໍາລະໜີ້ ຫຼື ບໍ່ຮັກສາລະດັບຄວາມສາມາດໃນການຊໍາລະໜີ້, ກະຊວງການເງິນ ຈະຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາຕາມກົດໝາຍ.

**ມາດຕາ 49 (ໃໝ່) ການແຈ້ງ ການສັ່ງໃຫ້ໂອນສັນຍາປະກັນໄພ ແລະ ການເຂົ້າຄວບຄຸມ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່**

ກ່ອນການສັ່ງໃຫ້ໂອນສັນຍາປະກັນໄພ ແລະ/ຫຼື ການເຂົ້າຄວບຄຸມ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ກະຊວງການເງິນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ບໍລິສັດຊາບ ຢ່າງໜ້ອຍ ຫ້າວັນ ລັດຖະການ.

**ມາດຕາ 50 (ປັບປຸງ) ການຖອນໃບອະນຸຍາດດໍາເນີນທຸລະກິດປະກັນໄພ**

ໃບອະນຸຍາດດໍາເນີນທຸລະກິດປະກັນໄພ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ທີ່ຖືກໂຈະ ຕາມກໍລະນີທີ່ໄດ້ກໍານົດໄວ້ໃນ ມາດຕາ 46 ຂອງກົດໝາຍສະບັບນີ້ ຊຶ່ງບໍ່ສາມາດແກ້ໄຂໄດ້;

2. ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ໄດ້ລະເມີດກົດໝາຍ;

3. ມີນິຕິບຸກຄົນທີ່ຖືຮຸ້ນ ແຕ່ ຫ້າສິບສ່ວນຮ້ອຍ ຂຶ້ນໄປ ໃນບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ຖືກປະກາດລົ້ມລະລາຍ ຫຼື ຖືກຖອນໃບອະນຸຍາດດໍາເນີນທຸລະກິດອື່ນ;

4. ການດໍາເນີນທຸລະກິດຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ໃນໄລຍະ ຫ້າປີ ທໍາອິດ ບໍ່ເປັນໄປຕາມແຜນທຸລະກິດ ທີ່ໄດ້ສະເໜີຂໍອະນຸຍາດດໍາເນີນທຸລະກິດ ໂດຍບໍ່ມີເຫດຜົນພຽງພໍ.

ໃນກໍລະນີມີການຖອນໃບອະນຸຍາດດໍາເນີນທຸລະກິດປະກັນໄພຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ແລ້ວ ໃບອະນຸຍາດ ທີ່ໄດ້ອອກໃຫ້ສາຂາຂອງບໍລິສັດດັ່ງກ່າວ ກໍຈະຖືກຖອນເຊັ່ນດຽວກັນ.

ເມື່ອມີການຖອນໃບອະນຸຍາດດໍາເນີນທຸລະກິດປະກັນໄພນັ້ນ ກະຊວງການເງິນ ຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ບໍລິສັດດັ່ງກ່າວ.

**ມາດຕາ 51 (ປັບປຸງ) ການສະເໜີໃຫ້ພິຈາລະນາຄືນການຖອນໃບອະນຸຍາດ**

ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ມີສິດສະເໜີຕໍ່ ກະຊວງການເງິນ ເພື່ອໃຫ້ພິຈາລະນາຄືນການຖອນ ໃບອະນຸຍາດພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການແຈ້ງ ເປັນຕົ້ນໄປ.

ໃນກໍລະນີ ກະຊວງການເງິນ ຫາກບໍ່ໄດ້ພິຈາລະນາ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາສະເໜີດັ່ງກ່າວ, ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ກໍມີສິດສະເໜີຕໍ່ຂັ້ນເທິງຖັດໄປ ເພື່ອພິຈາລະນາພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາສະເໜີເປັນຕົ້ນໄປ. ຖ້າບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ຫາກຍັງບໍ່ພໍໃຈ ກໍມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ຕາມກົດໝາຍ.

## ໝວດທີ 3
## ການຍຸບເລີກ, ການລົ້ມລະລາຍ ແລະ ການຊໍາລະສະສາງ ທຸລະກິດປະກັນໄພ

**ມາດຕາ 52 (ໃໝ່) ການຍຸບເລີກ**

ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຂໍຍຸບເລີກທຸລະກິດຂອງຕົນດ້ວຍຄວາມສະໝັກໃຈ ຕາມມະຕິກອງປະຊຸມຜູ້ຖືຮຸ້ນ;
2. ມີການລະເມີດ ກົດໝາຍ ແລະ/ຫຼື ລະບຽບການທີ່ກ່ຽວຂ້ອງ ແລະ ບໍ່ດໍາເນີນມາດຕະການແກ້ໄຂ ຕໍ່ການລະເມີດດັ່ງກ່າວ;
3. ໄດ້ຮັບອະນຸຍາດສ້າງຕັ້ງ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;
4. ດໍາເນີນທຸລະກິດຂອງຕົນ ໃນໄລຍະ ສາມປີ ທໍາອິດ ບໍ່ໄດ້ຕາມແຜນທຸລະກິດ ຫ້າປີ ທີ່ກໍານົດໄວ້ ແລະ ຂາດທຶນ ສາມປີ ຕິດຕໍ່ກັນ ໂດຍບໍ່ມີເຫດຜົນພຽງພໍ;
5. ຖືກຍຸບເລີກ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 53 (ໃໝ່) ການລົ້ມລະລາຍ**

ກະຊວງການເງິນ ມີສິດຮ້ອງຟ້ອງໃຫ້ສານຕັດສິນ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ທີ່ຢູ່ໃນສະພາວະວິກິດ ເປັນຜູ້ລົ້ມລະລາຍໃນກໍລະນີ ທີ່ເຫັນວ່າບໍລິສັດດັ່ງກ່າວ ບໍ່ສາມາດຟື້ນຟູໄດ້ ຫຼື ໄດ້ດໍາເນີນການຟື້ນຟູແລ້ວ ແຕ່ຍັງບໍ່ສາມາດສືບຕໍ່ດໍາເນີນທຸລະກິດປະກັນໄພໄດ້.

**ມາດຕາ 54 (ໃໝ່) ການຊໍາລະສະສາງ**

ພາຍຫຼັງການຍຸບເລີກ ຫຼື ສານຕັດສິນໃຫ້ລົ້ມລະລາຍແລ້ວ ກະຊວງການເງິນ ຈະແຕ່ງຕັ້ງຄະນະຊໍາລະສະສາງ.

ໃນກໍລະນີ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ທີ່ຖືກຍຸບເລີກດ້ວຍຄວາມສະໝັກໃຈ ມີຄວາມສາມາດຊໍາລະໜີ້ສິນຂອງຕົນໄດ້ຢ່າງຄົບຖ້ວນ ກະຊວງການເງິນ ກໍຈະມອບໃຫ້ບໍລິສັດດັ່ງກ່າວ ດໍາເນີນການຊໍາລະສະສາງດ້ວຍຕົນເອງ ແຕ່ຕ້ອງມີການຕິດຕາມຢ່າງໃກ້ຊິດ.

**ມາດຕາ 55 (ໃໝ່) ຄະນະຊໍາລະສະສາງ**

ຄະນະຊໍາລະສະສາງ ປະກອບດ້ວຍ ບຸກຄົນທີ່ມາຈາກ ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງທັງ ພາກລັດ ແລະ ພາກທຸລະກິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 56 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະຊຳລະສະສາງ

ຄະນະຊຳລະສະສາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດໜ້າທີ່ແທນ ຜູ້ບໍລິຫານ ແລະ ຜູ້ຖືຮຸ້ນຂອງ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ໃນການຊຳລະສະສາງ;

2. ດຳເນີນຂັ້ນຕອນການຢຸດເຊົາທຸລະກິດຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່;

3. ຄວບຄຸມເອກະສານ, ປຶ້ມບັນຊີ, ປຶ້ມບັນທຶກຕ່າງໆ ແລະ ຊັບສິນຂອງ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ຫຼື ບໍລິສັດໃນກຸ່ມ;

4. ລົບລ້າງສັນຍາຂອງ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງ;

5. ປົກປັກຮັກສາຊັບສິນຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ບໍ່ໃຫ້ເສຍຫາຍ;

6. ເກັບກູ້ຊັບສິນຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່;

7. ຂຶ້ນບັນຊີເຈົ້າໜີ້, ລູກໜີ້, ແລະ ຊັບສິນ, ສ້າງບົດລາຍງານຊັບສິນສຸດທິຂອງ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ໃຫ້ຖືກຕ້ອງ ແລ້ວສົ່ງສຳເນົາໃຫ້ ກະຊວງການເງິນ ພ້ອມທັງພິມເຜີຍແຜ່ຜ່ານສື່ມວນຊົນ;

8. ກຳນົດຈຳນວນເງິນ ທີ່ຈະຊຳລະສະສາງ ຕາມບຸລິມະສິດ;

9. ກຳນົດແຜນການ, ວິທີການ ແລະ ຮູບການຊຳລະສະສາງຊັບສິນ, ໜີ້ສິນ ເພື່ອສະເໜີກະຊວງການເງິນ ພິຈາລະນາ;

10. ລາຍງານໃຫ້ກະຊວງການເງິນ ກ່ຽວກັບຄວາມຄືບໜ້າຂອງການຊຳລະສະສາງຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 57 (ໃໝ່) ບຸລິມະສິດໃນການຊຳລະສະສາງ

ການຊຳລະສະສາງ ໃຫ້ປະຕິບັດຕາມລຳດັບບຸລິມະສິດ ດັ່ງນີ້:

1. ຄ່າໃຊ້ຈ່າຍໃນການຊຳລະສະສາງ;

2. ເງິນເດືອນ ແລະ ຄ່າແຮງງານຂອງພະນັກງານ, ຍົກເວັ້ນຄະນະອຳນວຍການຂອງ ບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່;

3. ການຈ່າຍຄືນໃຫ້ແກ່ຜູ້ຊື້ປະກັນໄພ;

4. ໜີ້ສິນທີ່ມີການຄ້ຳປະກັນຕາມສັນຍາ;

5. ພັນທະທາງດ້ານການເງິນທີ່ມີຕໍ່ລັດ;

6. ໜີ້ສິນທີ່ບໍ່ມີການຄ້ຳປະກັນ;

7. ການແບ່ງປັນໃຫ້ຜູ້ຖືຮຸ້ນຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່.

ສຳລັບຄ່າໃຊ້ຈ່າຍໃນການຊຳລະສະສາງຂອງແຕ່ລະບຸລິມະສິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 58 (ໃໝ່) ຜົນສະທ້ອນຂອງການເຂົ້າຊຳລະສະສາງ

ຜົນສະທ້ອນຂອງການເຂົ້າຊຳລະສະສາງ ມີ ດັ່ງນີ້:

1. ສິດ ຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ສັນຍາ ທີ່ໃກ້ສິ້ນສຸດ ຫຼື ຈະສິ້ນສຸດນັ້ນ ຕ້ອງໄດ້ຕໍ່ເວລາອອກໄປອີກ ຫົກ ເດືອນ ນັບແຕ່ວັນຄະນະຊຳລະສະສາງ ເຂົ້າປະຕິບັດໜ້າທີ່ ເປັນຕົ້ນໄປ;

2. ການອາຍັດຊັບສິນຂອງບໍລິສັດປະກັນໄພ ຫຼື ບໍລິສັດປະກັນໄພຕໍ່ ໃນເວລາຊຳລະສະສາງນັ້ນ ຈະຖືກຍົກເລີກ, ເວັ້ນເສຍແຕ່ໃນກໍລະນີການອາຍັດ ຫາກເກີດຂຶ້ນ ຫົກເດືອນ ກ່ອນວັນ ກະຊວງການເງິນ ຮ້ອງຟ້ອງເປັນລາຍລັກອັກສອນໃຫ້ສານຕັດສິນລົ້ມລະລາຍ ເປັນຕົ້ນໄປ;

3. ສິດຂອງຜູ້ຖືຮຸ້ນ ຈະຖືກຍົກເລີກ, ເວັ້ນເສຍແຕ່ສິດໄດ້ຮັບການແບ່ງປັນຊັບສິນ ທີ່ຍັງເຫຼືອ ຈາກການຊຳລະສະສາງ.

### ມາດຕາ 59 (ໃໝ່) ການລາຍງານຄັ້ງສຸດທ້າຍຂອງຄະນະຊຳລະສະສາງ

ພາຍຫຼັງດຳເນີນການຊຳລະສະສາງສຳເລັດແລ້ວ ຄະນະຊຳລະສະສາງ ຕ້ອງເຮັດບົດລາຍງານຄັ້ງສຸດທ້າຍໃຫ້ແກ່ກະຊວງການເງິນ. ສຳລັບການຕັດສິນຂອງສານໃຫ້ລົ້ມລະລາຍນັ້ນ ຄະນະຊຳລະສະສາງ ຍັງຕ້ອງສົ່ງບົດລາຍງານການລົ້ມລະລາຍ ໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ເພື່ອປິດສຳນວນຄະດີ.

ຫຼັງຈາກກະຊວງການເງິນ ໄດ້ຮັບຮອງບົດລາຍງານດັ່ງກ່າວແລ້ວ ຄະນະຊຳລະສະສາງ ກໍຈະໝົດຄວາມຮັບຜິດຊອບ.

## ພາກທີ V
## ຕົວແທນ ແລະ ນາຍໜ້າ ປະກັນໄພ
## ໝວດທີ 1
## ຕົວແທນປະກັນໄພ

### ມາດຕາ 60 (ປັບປຸງ) ຕົວແທນປະກັນໄພ

ຕົວແທນປະກັນໄພ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກຜູ້ປະກັນໄພ ບົນພື້ນຖານຂໍ້ຜູກພັນຂອງການເປັນຕົວແທນປະກັນໄພ ເພື່ອດຳເນີນກິດຈະການປະກັນໄພ ໂດຍສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ຜູ້ປະກັນໄພ ຕ້ອງນຳສົ່ງລາຍຊື່ຕົວແທນປະກັນໄພທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ ກະຊວງການເງິນ ເພື່ອດຳເນີນການລົງທະບຽນ ແລະ ອອກບັດຕົວແທນ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບບັດຕົວແທນປະກັນໄພຈາກ ກະຊວງການເງິນເທົ່ານັ້ນ ຈຶ່ງມີສິດປະຕິບັດໜ້າທີ່ເປັນຕົວແທນປະກັນໄພ ຢູ່ ສປປ ລາວ ໄດ້.

ການຂຶ້ນທະບຽນຕົວແທນປະກັນໄພ ຕ້ອງໄດ້ຮັບການຕໍ່ອາຍຸເປັນແຕ່ລະປີ ແລະ ຊຳລະຄ່າທຳນຽມໃຫ້ຄົບຖ້ວນຕາມເວລາທີ່ ກະຊວງການເງິນ ກຳນົດໄວ້.

ກະຊວງການເງິນ ຈະມີບັນຊີການຂຶ້ນທະບຽນ ແລະ ຖອນບັດຕົວແທນປະກັນໄພ ທີ່ລະເມີດຂໍ້ຫ້າມ, ລະບຽບການກ່ຽວກັບຕົວແທນ ຫຼື ບໍ່ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້ ແລະ ແຈ້ງໃຫ້ຜູ້ປະກັນໄພ ແລະ ຕົວແທນດັ່ງກ່າວ ເປັນລາຍລັກອັກສອນ.

### ມາດຕາ 61 (ປັບປຸງ) ເງື່ອນໄຂໃນການເປັນຕົວແທນປະກັນໄພ

ການເປັນຕົວແທນປະກັນໄພ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສຳລັບບຸກຄົນ:
- ເປັນພົນລະເມືອງລາວທີ່ມີພູມລຳເນົາ ຢູ່ ສປປ ລາວ;
- ມີອາຍຸແຕ່ ສິບແປດ ປີຂຶ້ນໄປ;

- ມີໃບຢັ້ງຢືນການຝຶກອົບຮົມເປັນຕົວແທນປະກັນໄພ ທີ່ອອກໃຫ້ໂດຍບໍລິສັດປະກັນໄພ ຫຼື ອົງການທີ່ກ່ຽວຂ້ອງ;
- ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບຍ້ອນການກະທຳຜິດໂດຍເຈດຕະນາ.

2. ສຳລັບນິຕິບຸກຄົນ:
- ເປັນວິສາຫະກິດທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງ;
- ມີບຸກຄະລາກອນ ແລະ ພະນັກງານຂາຍປະກັນໄພ ທີ່ມີເງື່ອນໄຂອັນດຽວກັນກັບຕົວແທນທີ່ເປັນບຸກຄົນ.

ສຳລັບການຄຸ້ມຄອງຕົວແທນປະກັນໄພນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກຖອນ ຫຼື ປະຕິເສດ ການຕໍ່ອາຍຸບັດຕົວແທນ ຍ້ອນບໍ່ປະຕິບັດຕາມໜ້າທີ່, ລະເມີດຂໍ້ຫ້າມ, ລະບຽບການກ່ຽວກັບຕົວແທນປະກັນໄພ ຈະບໍ່ອະນຸຍາດໃຫ້ເຄື່ອນໄຫວໃນທຸລະກິດປະກັນໄພ ເປັນເວລາ ສອງປີ.

**ມາດຕາ 62 (ປັບປຸງ) ສິດ ແລະ ໜ້າທີ່ຂອງຕົວແທນປະກັນໄພ**

ຕົວແທນປະກັນໄພ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຂາຍສະເພາະຜະລິດຕະພັນປະກັນໄພ ຂອງຜູ້ປະກັນໄພ ທີ່ຕົນເປັນຕົວແທນ ແລະ ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ໃນ ສປປ ລາວ ເທົ່ານັ້ນ;
2. ອອກສັນຍາປະກັນໄພ ອີງຕາມການອະນຸຍາດຂອງຜູ້ປະກັນໄພ ທີ່ຕົນເປັນຕົວແທນ;
3. ສະເໜີຂໍເອົາເອກະສານທີ່ກ່ຽວຂ້ອງຈາກລູກຄ້າ ເພື່ອຕື່ມຂໍ້ມູນລົງໃນແບບພິມສະເໜີຊື້ປະກັນໄພ ເພື່ອໃຫ້ສຳເລັດຂັ້ນຕອນການຂາຍປະກັນໄພ;
4. ອະທິບາຍຂໍ້ມູນສຳຄັນໃຫ້ຖືກຕ້ອງ ແລະ ຄົບຖ້ວນ ກ່ຽວກັບຜະລິດຕະພັນປະກັນໄພທີ່ສະເໜີຂາຍ;
5. ແຈ້ງຄ່າປະກັນໄພ ສຳລັບຜະລິດຕະພັນທີ່ສະເໜີຂາຍໃຫ້ລູກຄ້າ;
6. ເກັບຄ່າປະກັນໄພ ຈາກລູກຄ້າ ເພື່ອສົ່ງໃຫ້ຜູ້ປະກັນໄພຕາມກຳນົດເວລາ;
7. ໃຫ້ຄວາມຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ແກ່ຜູ້ຊື້ປະກັນໄພ, ຜູ້ຮ້ອງຂໍສິນປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ໃນການດຳເນີນຂັ້ນຕອນຮ້ອງຂໍສິນປະກັນໄພ ຈາກຜູ້ປະກັນໄພ;
8. ໄດ້ຮັບຄ່າຕອບແທນຈາກຜູ້ປະກັນໄພ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 63 (ປັບປຸງ) ຄວາມຮັບຜິດຊອບຂອງຕົວແທນປະກັນໄພ**

ໃນກໍລະນີ ຕົວແທນປະກັນໄພ ລະເມີດຂໍ້ຜູກພັນຂອງການເປັນຕົວແທນປະກັນໄພ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ ສິດ ແລະ ຜົນປະໂຫຍດຂອງ ຜູ້ຊື້ປະກັນໄພ ແລະ/ຫຼື ຜູ້ໄດ້ຮັບການປະກັນໄພນັ້ນ ຜູ້ປະກັນໄພ ຕ້ອງຮັບຜິດຊອບໂດຍກົງຕໍ່ຄວາມເສຍຫາຍທີ່ຕົວແທນປະກັນໄພໄດ້ກໍ່ຂຶ້ນ ແລະ ຕົວແທນປະກັນໄພ ຕ້ອງຮັບຜິດຊອບທົດແທນຄືນຄ່າເສຍຫາຍໃຫ້ແກ່ຜູ້ປະກັນໄພ ຕາມມູນຄ່າທີ່ຜູ້ປະກັນໄພ ໄດ້ຈ່າຍ.

## ໝວດທີ 2
## ນາຍໜ້າປະກັນໄພ

**ມາດຕາ 64 (ປັບປຸງ) ນາຍໜ້າປະກັນໄພ**

ນາຍໜ້າປະກັນໄພ ແມ່ນ ນິຕິບຸກຄົນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ໄດ້ຮັບອະນຸຍາດໃຫ້ເປັນນາຍໜ້າປະກັນໄພ ຈາກກະຊວງການເງິນ.

**ມາດຕາ 65 (ໃໝ່) ເງື່ອນໄຂໃນການເປັນນາຍໜ້າປະກັນໄພ**

ການເປັນນາຍໜ້າປະກັນໄພ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທະບຽນວິສາຫະກິດ;
2. ມີທຶນຈົດທະບຽນ ແລະ ວາງເງິນຄ້ຳປະກັນໃຫ້ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;
3. ໄດ້ຮັບການຢັ້ງຢືນກ່ຽວກັບຄວາມຮູ້ ແລະ ປະສົບການດ້ານການປະກັນໄພ ຈາກພາກສ່ວນທີ່ກະຊວງການເງິນ ຮັບຮູ້;
4. ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຄຸ້ມຄອງນາຍໜ້າປະກັນໄພ.

**ມາດຕາ 66 (ປັບປຸງ) ສິດ ແລະ ໜ້າທີ່ ຂອງນາຍໜ້າປະກັນໄພ**

ນາຍໜ້າປະກັນໄພ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບການປົກປ້ອງ ຕາມກົດໝາຍ;
2. ສະເໜີຄຳເຫັນກ່ຽວກັບການດຳເນີນທຸລະກິດປະກັນໄພ ຕໍ່ກະຊວງການເງິນ;
3. ດຳເນີນທຸລະກິດນາຍໜ້າປະກັນໄພດ້ວຍຄວາມສັດຊື່;
4. ຮັກສາຄວາມລັບຂອງຜູ້ປະກັນໄພ ແລະ ຜູ້ຊື້ປະກັນໄພທີ່ເຂົ້າໃຊ້ບໍລິການ;
5. ຮັບຜິດຊອບຕໍ່ທຸກຄວາມເສຍຫາຍ ທີ່ເກີດຂຶ້ນເນື່ອງຈາກການກະທຳທີ່ບໍ່ຖືກຕ້ອງຂອງຕົນຕໍ່ ຜູ້ປະກັນໄພ ແລະ ຜູ້ຊື້ປະກັນໄພ;
6. ແນະນຳຜະລິດຕະພັນປະກັນໄພຂອງຜູ້ປະກັນໄພຢູ່ ສປປ ລາວ;
7. ຖືການມອບໝາຍເປັນລາຍລັກອັກສອນຈາກລູກຄ້າ ເພື່ອເປັນຕົວແທນໄປປະສານງານກັບຜູ້ປະກັນໄພ ແລະ ແຈ້ງໃຫ້ລູກຄ້າຮັບຊາບ ເມື່ອສັນຍາປະກັນໄພ ມີຜົນນຳໃຊ້ໄດ້;
8. ໄດ້ຮັບຄ່າບໍລິການ;
9. ອະທິບາຍຂໍ້ກຳນົດ ແລະ ເງື່ອນໄຂສຳຄັນ ທີ່ສັນຍາປະກັນໄພຈະຄຸ້ມຄອງ ເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ລູກຄ້າ ກ່ຽວກັບຜະລິດຕະພັນປະກັນໄພທີ່ຈະຊື້;
10. ໃຫ້ຄຳແນະນຳແກ່ລູກຄ້າ ກ່ຽວກັບເງື່ອນໄຂ ແລະ ຂັ້ນຕອນ ທີ່ກ່ຽວຂ້ອງກັບການຮ້ອງຂໍສິນປະກັນໄພ;
11. ຄຸ້ມຄອງ ແລະ ຕິດຕາມ ພະນັກງານທຸກຄົນຂອງຕົນ ໃຫ້ປະຕິບັດຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
12. ລາຍງານຂໍ້ມູນການດຳເນີນທຸລະກິດນາຍໜ້າປະກັນໄພ ເປັນແຕ່ລະໄຕມາດ ແລະ ປະຈຳປີ ໃຫ້ກະຊວງການເງິນ.

**ມາດຕາ 67 (ໃໝ່) ການໂຈະ ຫຼື ຖອນໃບອະນຸຍາດການເປັນນາຍໜ້າປະກັນໄພ**

ການ ໂຈະ ຫຼື ຖອນ ໃບອະນຸຍາດການເປັນນາຍໜ້າປະກັນໄພ ສາມາດດຳເນີນໄດ້ ຖ້າຫາກ ເຫັນວ່າ:

1. ຂໍ້ມູນທີ່ປະກອບເອກະສານ ຂໍອະນຸຍາດເປັນນາຍໜ້າປະກັນໄພ ບໍ່ຖືກຕ້ອງກັບຄວາມເປັນຈິງ;

2. ນາຍໜ້າປະກັນໄພ ບໍ່ໄດ້ເຄື່ອນໄຫວທຸລະກິດນາຍໜ້າປະກັນໄພ ໃນໄລຍະ ໜຶ່ງປີ ທີ່ຜ່ານມາ ໂດຍບໍ່ໄດ້ລາຍງານ ຕໍ່ກະຊວງການເງິນ ເພື່ອຂໍອະນຸຍາດຢຸດເຊົາຊົ່ວຄາວ;

3. ນາຍໜ້າປະກັນໄພ ບໍ່ປະຕິບັດຕາມລະບຽບການ ທີ່ກະຊວງການເງິນ ວາງອອກ.

## ພາກທີ VI
## ການເງິນ, ການບັນຊີ ແລະ ຂໍ້ມູນກ່ຽວກັບທຸລະກິດປະກັນໄພ
### ໝວດທີ 1
### ການເງິນ, ການບັນຊີ ແລະ ການລາຍງານ

**ມາດຕາ 68 (ປັບປຸງ) ການເງິນ ແລະ ການບັນຊີ**

ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງມີລະບົບການເງິນ ແລະ ການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້, ກົດໝາຍວ່າດ້ວຍການບັນຊີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 69 (ປັບປຸງ) ທຶນສຳຮອງ**

ຜູ້ປະກັນໄພ, ນາຍໜ້າປະກັນໄພ ແລະ ຕົວແທນປະກັນໄພ ທີ່ເປັນນິຕິບຸກຄົນ ຕ້ອງສ້າງທຶນສຳຮອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ເພື່ອຮັບປະກັນໃນການດຳເນີນທຸລະກິດ ແລະ ການຂະຫຍາຍທຸລະກິດຂອງຕົນ.

**ມາດຕາ 70 (ປັບປຸງ) ເງິນແຮປະກັນໄພ**

ເງິນແຮປະກັນໄພ ແມ່ນ ເງິນທີ່ຜູ້ປະກັນໄພ ຫັກຈາກຄ່າປະກັນໄພ ຕາມລະບຽບການຂອງກະຊວງການເງິນ ເພື່ອຮັກສາຄວາມສາມາດໃນການຊຳລະໜີ້ ແລະ ປະຕິບັດລາຍຈ່າຍທີ່ອາດເກີດຂຶ້ນ ເປັນຕົ້ນ ສິນປະກັນໄພ ຕາມສັນຍາປະກັນໄພ, ຄ່າບໍລິການ ແລະ ຄ່າໃຊ້ຈ່າຍອື່ນ ກ່ຽວກັບການປະກັນໄພ.

ເງິນແຮປະກັນໄພ ຕ້ອງໃຫ້ພຽງພໍ ເພື່ອປະຕິບັດພັນທະຢ່າງເຕັມສ່ວນຕໍ່ ຜູ້ຊື້ປະກັນໄພ, ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ຈາກການປະກັນໄພ.

ສຳລັບ ວິທີການຄິດໄລ່ ແລະ ຈຳນວນເງິນແຮປະກັນໄພ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 71 (ປັບປຸງ) ການບໍລິຫານຊັບສິນຂອງຜູ້ປະກັນໄພ**

ຜູ້ປະກັນໄພ ມີສິດນຳເອົາຊັບສິນຂອງຕົນໄປລົງທຶນ ບົນພື້ນຖານການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ ແຕ່ຕ້ອງຮັບປະກັນຄວາມປອດໄພ, ປະສິດທິຜົນ ແລະ ຮັບປະກັນຄວາມສາມາດໃນການຊຳລະສິນປະກັນໄພ ຢ່າງເປັນປົກກະຕິຕາມສັນຍາປະກັນໄພ.

ຜູ້ປະກັນໄພ ສາມາດນຳໃຊ້ຊັບສິນ ເພື່ອລົງທຶນ ຢູ່ ສປປ ລາວ ໃນຂົງເຂດ ດັ່ງນີ້:

1. ຊື້ພັນທະບັດລັດຖະບານ, ພັນທະບັດ ແລະ ຮຸ້ນ ຂອງວິສາຫະກິດ;

2. ຝາກເງິນໄວ້ກັບທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ;

3. ລົງທຶນໃນຂົງເຂດອື່ນ ຕາມການອະນຸຍາດຈາກກະຊວງການເງິນ.

ສໍາລັບ ຂອບເຂດ, ຈໍານວນ, ປະເພດ ແລະ ຮູບແບບການລົງທຶນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 72 (ໃໝ່) ການສ້າງໜີ້ສິນຂອງຜູ້ປະກັນໄພ**

ການກູ້ຢືມເງິນ, ການຄໍ້າປະກັນການຊໍາລະໜີ້, ການເຮັດສັນຍາເປັນຜູ້ຄໍ້າປະກັນການຊໍາລະໜີ້ ຫຼື ການຮັບເອົາຄວາມຮັບຜິດຊອບທາງດ້ານການເງິນ ໃຫ້ບຸກຄົນອື່ນ ຕ້ອງຂໍອະນຸຍາດຈາກກະຊວງການເງິນ.

**ມາດຕາ 73 (ໃໝ່) ຊັບສິນທີ່ບໍ່ອະນຸຍາດໃຫ້ບຸກຄົນອື່ນນໍາໃຊ້**

ຊັບສິນຂອງຜູ້ປະກັນໄພ ຈະບໍ່ສາມາດໃຫ້ບຸກຄົນອື່ນນໍາໃຊ້, ນໍາໄປຄໍ້າປະກັນ ຫຼື ຈໍານໍາ, ຈໍານອງໄດ້, ເວັ້ນເສຍແຕ່ໄດ້ຮັບການອະນຸຍາດຈາກກະຊວງການເງິນ ແລະ ໃນຂອບເຂດທີ່ໄດ້ຮັບອະນຸຍາດ.

ຖ້າຊັບສິນຂອງຜູ້ປະກັນໄພ ຫາກຖືກເອົາໄປປະຕິບັດຕາມວັກທີ ໜຶ່ງ ຂອງມາດຕານີ້ ມູນຄ່າຂອງຊັບສິນຂອງ ຜູ້ປະກັນໄພ ຈະຕ້ອງໄດ້ຫຼຸດລົງຕາມມູນຄ່າຂອງຊັບສິນທີ່ໄດ້ໃຫ້ບຸກຄົນອື່ນນໍາໃຊ້, ນໍາໄປຄໍ້າປະກັນ ຫຼື ຈໍານໍາ, ຈໍານອງນັ້ນ.

**ມາດຕາ 74 (ປັບປຸງ) ຄວາມສາມາດໃນການຊໍາລະໜີ້**

ຄວາມສາມາດໃນການຊໍາລະໜີ້ ແມ່ນ ຕົວຊີ້ວັດເພື່ອຮັບປະກັນຄວາມໝັ້ນຄົງຂອງທຸລະກິດ ແລະ ສະພາບຄ່ອງໃນການຈ່າຍສິນປະກັນໄພ. ຜູ້ປະກັນໄພ ຕ້ອງຮັກສາລະດັບຄວາມສາມາດໃນການຊໍາລະໜີ້ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການຂອງກະຊວງການເງິນ ເພື່ອຮັບປະກັນຄວາມພຽງພໍໃນການຊໍາລະໜີ້ຂອງຕົນ ຕະຫຼອດໄລຍະການດໍາເນີນທຸລະກິດ.

**ມາດຕາ 75 (ໃໝ່) ການກວດສອບ**

ໃນແຕ່ລະປີ ຜູ້ປະກັນໄພ ຕ້ອງໄດ້ຖືກກວດສອບ ໂດຍບໍລິສັດກວດສອບອິດສະລະທີ່ຖືກຕ້ອງຕາມກົດໝາຍ ເພື່ອ:

1. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນໃນການຖືບັນຊີ ຕາມລະບົບບັນຊີທີ່ໄດ້ກໍານົດໄວ້ໃນກົດໝາຍ;

2. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານລາຍງານການເງິນ;

3. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງການຄຸ້ມຄອງພາຍໃນ ພ້ອມທັງໃຫ້ຄໍາແນະນໍາກ່ຽວກັບມາດຕະການແກ້ໄຂ;

4. ຢັ້ງຢືນກ່ຽວກັບການຈັດຕັ້ງປະຕິບັດ ການແກ້ໄຂບັນຫາ ຕໍ່ການລະເມີດຂອງຜູ້ປະກັນໄພ ທີ່ກະຊວງການເງິນ ໄດ້ກວດເຫັນ ແລະ ໄດ້ແຈ້ງໃຫ້ຜູ້ປະກັນໄພ;

5. ລາຍງານໃຫ້ກະຊວງການເງິນ ກ່ຽວກັບການລະເມີດກົດໝາຍຂອງ ຜູ້ປະກັນໄພ ຫຼື ການກະທໍາໃດໜຶ່ງ ທີ່ອາດຈະມີຜົນຕໍ່ຄວາມໝັ້ນຄົງຂອງຜູ້ປະກັນໄພ.

ກະຊວງການເງິນ ເປັນຜູ້ກໍານົດ ແລະ ຮັບຮອງບັນຊີລາຍຊື່ບໍລິສັດກວດສອບອິດສະລະ ທີ່ສ້າງຕັ້ງຖືກຕ້ອງຕາມກົດໝາຍ ເພື່ອຮັບປະກັນຄຸນນະພາບ, ຈັນຍາບັນ ແລະ ຄວາມເປັນອິດສະລະ ຂອງບໍລິສັດດັ່ງກ່າວ.

ຜູ້ປະກັນໄພ ຕ້ອງວ່າຈ້າງບໍລິສັດກວດສອບອິດສະລະ ຕາມບັນຊີລາຍຊື່ທີ່ໄດ້ຮັບຮອງນັ້ນ ເພື່ອມາກວດສອບບໍລິສັດຂອງຕົນ.

ບໍລິສັດກວດສອບອິດສະລະ ມີພັນທະໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນຕ່າງໆໃຫ້ ກະຊວງການເງິນ ຕາມກົດໝາຍ.

**ມາດຕາ 76 (ໃໝ່) ການນຳໃຊ້ນັກຄະນິດສາດປະກັນໄພ**

ຜູ້ປະກັນໄພ ຕ້ອງນຳໃຊ້ນັກຄະນິດສາດປະກັນໄພ ເພື່ອຄິດໄລ່ຄ່າປະກັນໄພ, ປະເມີນເງິນແຮປະກັນໄພ, ລະດັບຄວາມສາມາດໃນການຊຳລະໜີ້, ສ້າງບົດລາຍງານດ້ານຄະນິດສາດປະກັນໄພ ແລະ ປະຕິບັດວຽກງານອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສຳລັບ ມາດຕະຖານ, ເງື່ອນໄຂ ຂອງນັກຄະນິດສາດປະກັນໄພ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 77 (ປັບປຸງ) ເອກະສານລາຍງານການເງິນ

ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງປະຕິບັດຕາມລະບຽບການລາຍງານການເງິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ກະຊວງການເງິນ.

ນອກຈາກການລາຍງານປົກກະຕິແລ້ວ ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຍັງຕ້ອງສົ່ງເອກະສານລາຍງານການເງິນໃຫ້ກະຊວງການເງິນ ໃນກໍລະນີ ດັ່ງນີ້:

1. ມີເຫດການໃໝ່ທີ່ເກີດຂຶ້ນໃນການດຳເນີນທຸລະກິດ;
2. ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ບໍ່ສາມາດປະຕິບັດພັນທະທາງດ້ານການເງິນ;
3. ມີໜັງສືສະເໜີ ຂໍຂໍ້ມູນສະເພາະຈາກກະຊວງການເງິນ.

ມາດຕາ 78 (ໃໝ່) ການເປີດເຜີຍຂໍ້ມູນດ້ານການເງິນ

ຜູ້ປະກັນໄພ ຕ້ອງເປີດເຜີຍຂໍ້ມູນດ້ານການເງິນ ຜ່ານເວັບໄຊຂອງຕົນ ຫຼື ຊ່ອງທາງອື່ນທີ່ມວນຊົນສາມາດເຂົ້າເຖິງໄດ້ ແລະ ຕ້ອງມີກົນໄກທີ່ເໝາະສົມ ເພື່ອແຈ້ງໃຫ້ແກ່ລູກຄ້າຂອງຕົນທຸກຄັ້ງ ທີ່ມີການເປີດເຜີຍຂໍ້ມູນດ້ານການເງິນ ພ້ອມທັງລາຍງານໃຫ້ ກະຊວງການເງິນ.

ຂໍ້ມູນດ້ານການເງິນທີ່ຕ້ອງເປີດເຜີຍ ມີ ດັ່ງນີ້:

1. ບົດລາຍງານປະຈຳໄຕມາດ ຕາມລະບຽບການຂອງ ກະຊວງການເງິນ;
2. ບົດລາຍງານປະຈຳປີ ແລະ ຄຳເຫັນຂອງບໍລິສັດກວດສອບຕໍ່ບົດລາຍງານດັ່ງກ່າວ ຕາມລະບຽບການຂອງກະຊວງການເງິນ;
3. ຂໍ້ມູນອື່ນທີ່ຊ່ວຍໃຫ້ມວນຊົນ ສາມາດເຫັນໄດ້ສະພາບຄວາມໝັ້ນຄົງຂອງຜູ້ປະກັນໄພ.

ໃນກໍລະນີຜູ້ປະກັນໄພ ມີບໍລິສັດໃນກຸ່ມ ການເປີດເຜີຍຕ້ອງລວມເອົາຂໍ້ມູນຂອງບໍລິສັດໃນກຸ່ມຕົນ ເພື່ອໃຫ້ມວນຊົນສາມາດເຫັນໄດ້ພາບລວມທາງດ້ານນະໂຍບາຍ, ແຜນການດຳເນີນທຸລະກິດ ແລະ ການບໍລິຫານຈັດການ ລວມທັງເອກະສານລາຍງານການເງິນຂອງບໍລິສັດໃນກຸ່ມດັ່ງກ່າວ.

## ໝວດທີ 2
## ຂໍ້ມູນກ່ຽວກັບທຸລະກິດປະກັນໄພ

**ມາດຕາ 79 (ໃໝ່) ຂໍ້ມູນກ່ຽວກັບທຸລະກິດປະກັນໄພ**

ຂໍ້ມູນທຸລະກິດປະກັນໄພ ແມ່ນ ຂໍ້ມູນທາງດ້ານການເງິນ, ການບັນຊີ ແລະ ຂໍ້ມູນອື່ນຂອງຜູ້ປະກັນໄພ.

**ມາດຕາ 80 (ໃໝ່) ການຮັກສາຄວາມລັບຂໍ້ມູນກ່ຽວກັບທຸລະກິດປະກັນໄພ**

ກະຊວງການເງິນ ຕ້ອງຮັກສາຄວາມລັບຂໍ້ມູນຂອງຜູ້ປະກັນໄພ ທີ່ສົ່ງຜົນກະທົບຕໍ່ການດໍາເນີນທຸລະກິດຂອງຜູ້ປະກັນໄພຢ່າງເຂັ້ມງວດ, ເວັ້ນເສຍແຕ່ໃນກໍລະນີ ດັ່ງນີ້:

1. ເປີດເຜີຍຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ເພື່ອການຄຸ້ມຄອງ ແລະ/ຫຼື ການບັງຄັບໃຊ້ກົດໝາຍ;
2. ເປັນຂໍ້ມູນທີ່ໄດ້ມາຈາກການສໍາຫຼວດກ່ຽວກັບວຽກງານປະກັນໄພ.

**ມາດຕາ 81 (ໃໝ່) ການເປີດເຜີຍຂໍ້ມູນກ່ຽວກັບທຸລະກິດປະກັນໄພ**

ເພື່ອຮັບປະກັນບໍ່ໃຫ້ຂໍ້ມູນທີ່ຜູ້ປະກັນໄພສະໜອງໃຫ້ ຖືກເປີດເຜີຍກ່ອນໄດ້ຮັບອະນຸຍາດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້ ກະຊວງການເງິນ ຈະເຮັດສັນຍາທາງການ ຫຼື ບໍ່ເປັນທາງການ ເພື່ອເປີດເຜີຍຂໍ້ມູນ ດ້ວຍການຮ່ວມມືກັບອົງການຈັດຕັ້ງລັດທີ່ກ່ຽວຂ້ອງ.

ກະຊວງການເງິນ ຈະເຮັດສັນຍາທາງການ ຫຼື ບໍ່ເປັນທາງການ ຕາງໜ້າລັດຖະບານ ແຫ່ງ ສປປ ລາວ ເພື່ອເປີດເຜີຍຂໍ້ມູນ ດ້ວຍການຮ່ວມມືກັບຜູ້ຕາງໜ້າລັດຖະບານຂອງຕ່າງປະເທດ ທີ່ຮັບຜິດຊອບຄຸ້ມຄອງສະຖາບັນການເງິນ.

## ພາກທີ VII
## ສິດ, ພັນທະຂອງ ຜູ້ປະກັນໄພ ແລະ ຜູ້ຊື້ປະກັນໄພ

**ມາດຕາ 82 (ປັບປຸງ) ສິດ ແລະ ພັນທະຂອງ ບໍລິສັດປະກັນໄພ ແລະ ບໍລິສັດປະກັນໄພຕໍ່**

ບໍລິສັດປະກັນໄພ ມີ ສິດ ດັ່ງນີ້:

1. ເກັບຄ່າປະກັນໄພ ຕາມສັນຍາປະກັນໄພ;
2. ສະເໜີໃຫ້ຜູ້ຊື້ປະກັນໄພ ສະໜອງຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນ ເພື່ອເຮັດສັນຍາ ແລະ ອອກສັນຍາປະກັນໄພ;
3. ໂຈະ ຫຼື ຍົກເລີກ ສັນຍາປະກັນໄພ ທີ່ມີການສະໜອງຂໍ້ມູນບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ;
4. ປະຕິເສດການຈ່າຍສິນປະກັນໄພ ທີ່ບໍ່ໄດ້ກໍານົດໄວ້ໃນເງື່ອນໄຂຂອງສັນຍາປະກັນໄພ;
5. ທວງເອົາຂໍ້ມູນຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາການຈ່າຍສິນປະກັນໄພ;
6. ທວງເອົາເງິນຈາກບຸກຄົນທີສາມ ຊຶ່ງເປັນຕົ້ນເຫດຂອງການກໍ່ຄວາມເສຍຫາຍ;
7. ນໍາໃຊ້ສິດ ຕາມທີ່ໄດ້ກໍານົດໄວ້ໃນສັນຍາປະກັນໄພ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ບໍລິສັດປະກັນໄພ ມີ ພັນທະ ດັ່ງນີ້:

1. ອະທິບາຍໃຫ້ຄວາມກະຈ່າງແຈ້ງ ຕໍ່ຜູ້ສະເໜີຊື້ປະກັນໄພກ່ຽວກັບເງື່ອນໄຂ, ສິດ ແລະ ພັນທະ ຂອງຜູ້ຊື້ປະກັນໄພ;
2. ເຮັດສັນຍາປະກັນໄພກັບຜູ້ຊື້ປະກັນໄພ;
3. ຈ່າຍສິນປະກັນໄພຕາມສັນຍາປະກັນໄພໃຫ້ ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ຢ່າງຖືກຕ້ອງ ແລະ ຄົບຖ້ວນ;
4. ແຈ້ງເຫດຜົນເປັນລາຍລັກອັກສອນ ກ່ຽວກັບການປະຕິເສດໃນການບໍ່ຈ່າຍສິນປະກັນໄພ;
5. ເປັນເຈົ້າການໃນການປະສານສົມທົບກັບຜູ້ຊື້ປະກັນໄພໃຫ້ມີຄວາມວ່ອງໄວ, ໂປ່ງໃສ ເພື່ອອໍານວຍຄວາມສະດວກ ໃນການຈ່າຍສິນປະກັນໄພ;
6. ປະຕິບັດພັນທະທາງດ້ານພາສີ, ອາກອນ ແລະ ພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;
7. ມີຄວາມຮັບຜິດຊອບໃນການແກ້ໄຂ ຄວາມເສຍຫາຍທີ່ເກີດຂຶ້ນ ຢ່າງທັນການ;
8. ສະໜອງຂໍ້ມູນທີ່ພົວພັນກັບສັນຍາປະກັນໄພຢ່າງຖືກຕ້ອງ ແລະ ຄົບຖ້ວນ, ອະທິບາຍເງື່ອນໄຂ, ເນື້ອໃນຂອງສັນຍາປະກັນໄພໃຫ້ຜູ້ຊື້ປະກັນໄພ;
9. ຮັກສາຄວາມລັບກ່ຽວກັບຂໍ້ມູນທີ່ຜູ້ຊື້ປະກັນໄພໄດ້ສະໜອງໃຫ້ແກ່ຕົນ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາປະກັນໄພ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສໍາລັບ ສິດ ແລະ ພັນທະ ຂອງບໍລິສັດປະກັນໄພຕໍ່ ໄດ້ກໍານົດໄວ້ໃນສັນຍາປະກັນໄພຕໍ່.

**ມາດຕາ 83 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ຊື້ປະກັນໄພ**

ຜູ້ຊື້ປະກັນໄພ ມີ ສິດ ດັ່ງນີ້:

1. ສະເໜີໃຫ້ຜູ້ປະກັນໄພອະທິບາຍນະໂຍບາຍ, ເງື່ອນໄຂການປະກັນໄພ ແລະ ເຮັດສັນຍາປະກັນໄພ;
2. ໂຈະ ຫຼື ຍົກເລີກ ສັນຍາປະກັນໄພ ໃນກໍລະນີຜູ້ປະກັນໄພ ສະໜອງຂໍ້ມູນບໍ່ຖືກຕ້ອງຕາມສັນຍາປະກັນໄພ;
3. ສະເໜີໃຫ້ຜູ້ປະກັນໄພຈ່າຍສິນປະກັນໄພຕາມສັນຍາ;
4. ຕໍານິ ສົ່ງຂ່າວ ການປະຕິບັດໜ້າທີ່ ຂອງຕົວແທນປະກັນໄພ, ນາຍໜ້າປະກັນໄພ ແລະ ຜູ້ປະກັນໄພ ຢ່າງເປັນລາຍລັກອັກສອນ;
5. ໄດ້ຮັບຜົນປະໂຫຍດຢ່າງຄົບຖ້ວນ ຕາມສັນຍາປະກັນໄພ;
6. ສະເໜີຂໍຄວາມເປັນທໍາ ຕໍ່ຜູ້ປະກັນໄພຢ່າງເປັນລາຍລັກອັກສອນ ແລະ ຖ້າບໍ່ໄດ້ຮັບການແກ້ໄຂ ກໍສາມາດຍື່ນຄໍາຮ້ອງຕໍ່ກະຊວງການເງິນ ແລະ ຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາ;
7. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ສັນຍາປະກັນໄພ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ຊື້ປະກັນໄພ ມີ ພັນທະ ດັ່ງນີ້:

1. ຈ່າຍຄ່າປະກັນໄພ ຕາມສັນຍາ;

2. ແຈ້ງໃຫ້ຜູ້ປະກັນໄພ ຢ່າງທັນການກ່ຽວກັບ ການສູນເສຍ ຫຼື ການເສຍຫາຍ ທີ່ມີການຄຸ້ມຄອງ ພາຍຫຼັງທີ່ໄດ້ຮູ້ ຢ່າງຊ້າບໍ່ໃຫ້ກາຍ ຫ້າ ວັນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ;

3. ສະໜອງຂໍ້ມູນທີ່ຖືກຕ້ອງ ເພື່ອຊ່ວຍປະເມີນການສ່ຽງໄພທີ່ຈະຖືກເປັນພາລະຂອງຜູ້ປະກັນໄພຢ່າງເໝາະສົມ ໃນເວລາເຮັດສັນຍາປະກັນໄພ;

4. ສະໜອງຂໍ້ມູນເພີ່ມເຕີມ ທີ່ຈະເປັນຜົນສະທ້ອນ ໃຫ້ການສ່ຽງໄພເພີ່ມຂຶ້ນ ໃຫ້ຜູ້ປະກັນໄພຮູ້ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ;

5. ສະໜອງຂໍ້ມູນທີ່ພົວພັນ ເຖິງການປະກັນໄພ ຢ່າງຈະແຈ້ງ, ຖືກຕ້ອງ ແລະ ຄົບຖ້ວນ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ສັນຍາປະກັນໄພ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VIII
## ຂໍ້ຫ້າມ

### ມາດຕາ 84 ຂໍ້ຫ້າມສຳລັບເຈົ້າໜ້າທີ່ປະກັນໄພ

ຫ້າມເຈົ້າໜ້າທີ່ປະກັນໄພ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຮັບຜົນປະໂຫຍດສ່ວນຕົວຈາກທຸລະກິດປະກັນໄພ;

2. ສວຍໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

3. ປະລະ ໜ້າທີ່ ແລະ ຄວາມຮັບຜິດຊອບ ກ່ຽວກັບວຽກງານປະກັນໄພ ທີ່ການຈັດຕັ້ງມອບໝາຍໃຫ້;

4. ເປີດເຜີຍຄວາມລັບ ຂອງລັດ ແລະ ທາງລັດຖະການ ກ່ຽວກັບວຽກງານປະກັນໄພ ໂດຍບໍ່ໄດ້ຮັບອະນຸຍາດ;

5. ປອມແປງເອກະສານກ່ຽວກັບວຽກງານປະກັນໄພ;

6. ດຳເນີນ ຫຼື ເຂົ້າຮ່ວມການດຳເນີນທຸລະກິດປະກັນໄພໃນທຸກຮູບແບບ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 85 (ປັບປຸງ) ຂໍ້ຫ້າມສຳລັບ ຜູ້ປະກັນໄພ, ຕົວແທນປະກັນໄພ ແລະ ນາຍໜ້າປະກັນໄພ

ຫ້າມ ຜູ້ປະກັນໄພ, ຕົວແທນປະກັນໄພ ແລະ ນາຍໜ້າປະກັນໄພ ມີພຶດຕິກຳ ດັ່ງນີ້:

1. ທຳລາຍຂໍ້ມູນຫຼັກຖານ, ປົກປິດ ເຊື່ອງອຳ ລາຍຮັບ ແລະ ຊຸກເຊື່ອງການກະທຳຜິດ ທີ່ຕິດພັນກັບວຽກງານປະກັນໄພ;

2. ໃຫ້ສິນບົນ ຫຼື ຄ່າຈ້າງລາງວັນ, ສົມຮູ້ຮ່ວມຄິດກັບບຸກຄົນອື່ນ ເພື່ອຫວັງຜົນປະໂຫຍດ;

3. ປະຕິເສດ ແລະ ຫຼີກລ່ຽງ ການແກ້ໄຂ ກ່ຽວກັບການຮ້ອງຂໍສິນປະກັນໄພ;

4. ປອມແປງໃບຮັບເງິນ, ເກັບເງິນ ຫຼື ເອກະສານອື່ນ;

5. ໝິ່ນປະໝາດ, ນາບຂູ່, ທຳຮ້າຍຮ່າງກາຍ ເຈົ້າໜ້າທີ່ປະກັນໄພ;

6. ໂຄສະນາບິດເບືອນຄວາມຈິງ ກ່ຽວກັບເນື້ອໃນ, ຂອບເຂດການເຄື່ອນໄຫວ, ເງື່ອນໄຂການປະກັນໄພ ທີ່ສົ່ງຜົນກະທົບເຖິງຜົນປະໂຫຍດທີ່ຈະໄດ້ຮັບຂອງຜູ້ຊື້ປະກັນໄພ;

7. ຍາດແຍ່ງລູກຄ້າດ້ວຍການ ສະກັດກັ້ນ, ຊື້ຈ້າງ, ຂົ່ມຂູ່ ເຈົ້າໜ້າທີ່ປະກັນໄພ, ຜູ້ໄດ້ຮັບການປະກັນໄພ, ຕົວແທນປະກັນໄພ ແລະ ນາຍໜ້າປະກັນໄພອື່ນ;

8. ໃຫ້ສິ່ງຕອບແທນແກ່ລູກຄ້າທີ່ບໍ່ເໝາະສົມຕາມຄວາມຈິງ ແລະ ເຮັດການແຂ່ງຂັນທີ່ບໍ່ເໝາະສົມ;

9. ຫຼຸດຄ່າປະກັນໄພຕໍ່າກວ່າການກຳນົດຂອງ ກະຊວງການເງິນ;

10. ລອກແບບຜະລິດຕະພັນປະກັນໄພ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງຊັບສິນທາງປັນຍາ;

11. ເຄື່ອນໄຫວທຸລະກິດປະກັນຊີວິດ ແລະ ປະກັນໄພທົ່ວໄປໃນເວລາດຽວກັນ ສຳລັບຜູ້ປະກັນໄພ;

12. ດຳເນີນທຸລະກິດປະກັນໄພປະເພດອື່ນ, ຂາຍ ຫຼື ເຮັດສັນຍາ ປະກັນໄພອື່ນ ທີ່ບໍ່ໄດ້ຮັບອະນຸຍາດ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 86 (ປັບປຸງ) ຂໍ້ຫ້າມ ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ສິດເກີນຂອບເຂດ, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ ແລະ ເຈົ້າໜ້າທີ່ປະກັນໄພ ເພື່ອຫາຜົນປະໂຫຍດແກ່ຕົນ ຫຼື ພັກພວກກ່ຽວກັບວຽກງານປະກັນໄພ;

2. ດຳເນີນທຸລະກິດປະກັນໄພ ໂດຍບໍ່ໄດ້ຮັບອະນຸຍາດ;

3. ນຳໃຊ້ ຊື່ ຫຼື ການແປຕາມຕົວອັກສອນ ຫຼື ຕົວຫຍໍ້ ທີ່ມີຄຳສັບ ກ່ຽວກັບວຽກງານປະກັນໄພ ເປັນຕົ້ນ ຜູ້ປະກັນໄພ, ຕົວແທນປະກັນໄພ, ນາຍໜ້າປະກັນໄພ, ຜູ້ໃຫ້ຄຳປຶກສາດ້ານການປະກັນໄພ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງການເງິນ;

4. ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ປະກັນໄພ;

5. ປະຕິເສດການສະໜອງຂໍ້ມູນ, ສ່ວນຮ່ວມໃນການປົກປິດ ແລະ ຊຸກຍູ້ໃຫ້ຜູ້ດຳເນີນທຸລະກິດປະກັນໄພເສຍພັນທະຕໍ່ລັດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາ ວຽກງານປະກັນໄພ
### ໝວດທີ 1
### ການຄຸ້ມຄອງວຽກງານປະກັນໄພ

**ມາດຕາ 87 (ປັບປຸງ) ອົງການຄຸ້ມຄອງວຽກງານປະກັນໄພ**

ລັດຖະບານ ຄຸ້ມຄອງວຽກງານປະກັນໄພ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ ກະຊວງການເງິນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 88 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານປະກັນໄພ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປະກັນໄພ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປະກັນໄພ ເປັນ ແຜນການ, ແຜນງານ ແລະ/ຫຼື ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານປະກັນໄພ;

4. ສ້າງຄວາມຮັບຮູ້ກ່ຽວກັບການປະກັນໄພ ໃຫ້ສັງຄົມ ແລະ ສົ່ງເສີມການພັດທະນາຕະຫຼາດປະກັນໄພ;

5. ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານປະກັນໄພ;

6. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ພະນັກງານ-ລັດຖະກອນ ກ່ຽວກັບວຽກງານປະກັນໄພ;

7. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານປະກັນໄພ;

8. ພິຈາລະນາ ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ສັບຊ້ອນ, ຍ້ອງຍໍ, ລົງວິໄນ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານປະກັນໄພ;

9. ເຂົ້າຮ່ວມໃນການເຈລະຈາສັນຍາ ທີ່ຕິດພັນກັບວຽກງານປະກັນໄພ;

10. ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດປະກັນໄພ ແລະ ນຳໃຊ້ມາດຕະການຕໍ່ຜູ້ປະກັນໄພ, ຕົວແທນປະກັນໄພ ແລະ ນາຍໜ້າປະກັນໄພ ທີ່ລະເມີດກົດໝາຍ ແລະ ລະບຽບການ;

11. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດຂອງຜູ້ປະກັນໄພ, ຕົວແທນປະກັນໄພ, ນາຍໜ້າປະກັນໄພ ແລະ ກິດຈະການທີ່ຕິດພັນກັບທຸລະກິດປະກັນໄພ;

12. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີ, ຂໍ້ຂັດແຍ່ງຂອງ ບຸກຄົນ, ນິຕິບຸກຄົນ ກ່ຽວກັບວຽກງານປະກັນໄພ ໂດຍສອດຄ່ອງກັບກົດໝາຍ;

13. ສະໜອງຂໍ້ມູນ ແລະ ສະກັດກັ້ນ ອາຊະຍາກຳທາງການເງິນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂະແໜງປະກັນໄພ ຕາມກົດໝາຍ;

14. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະກັນໄພ;

15. ສະຫຼຸບ ແລະ ລາຍງານ ການປະຕິບັດໜ້າທີ່ຄຸ້ມຄອງວຽກງານປະກັນໄພຕໍ່ລັດຖະບານ ຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານປະກັນໄພ

**ມາດຕາ 89 ອົງການກວດກາວຽກງານປະກັນໄພ**

ອົງການກວດກາວຽກງານປະກັນໄພ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນກະຊວງການເງິນ ແລະ ເຈົ້າໜ້າທີ່ປະກັນໄພ;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ ແລະ ອົງການກວດສອບແຫ່ງລັດ.

**ມາດຕາ 90 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ**

ອົງການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ ແລະ ເຈົ້າໜ້າທີ່ປະກັນໄພແຕ່ລະຂັ້ນໃນການປະຕິບັດ ກົດໝາຍ, ມະຕິ, ຄຳສັ່ງ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ, ແບບແຜນວິທີເຮັດວຽກ, ວິຊາສະເພາະ ເພື່ອຮັບປະກັນໃຫ້ການຈັດຕັ້ງ ແລະ ເຄື່ອນໄຫວວຽກງານມີປະສິດທິພາບ ແລະ ປະສິດທິຜົນສູງ;

2. ກວດກາຜູ້ປະກັນໄພ, ຕົວແທນປະກັນໄພ ແລະ ນາຍໜ້າປະກັນໄພ ຕາມເປົ້າໝາຍກ່ຽວກັບການສ້າງແຜນການເຄື່ອນໄຫວທຸລະກິດປະກັນໄພ, ການລົງໃຊ້, ການເກັບຄ່າທຳນຽມ ແລະ ຄ່າບໍລິການປະກັນໄພ.

**ມາດຕາ 91 ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີ ສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປະກັນໄພ ຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ, ກວດກາການເຄື່ອນໄຫວວຽກງານຂອງເຈົ້າໜ້າທີ່ປະກັນໄພ ຢ່າງເຂັ້ມງວດ ເປັນຕົ້ນ ປາກົດການ, ຫາງສຽງຂອງສັງຄົມ ແລະ ການຮ້ອງຟ້ອງຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ເພື່ອເຮັດໃຫ້ວຽກງານປະກັນໄພ ມີປະສິດທິພາບ, ຄວາມໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 92 ຮູບການການກວດກາ**

ການກວດກາ ປະກອບດ້ວຍຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ.

**ມາດຕາ 93 (ໃໝ່) ການກວດກາດ້ານວິຊາການ**

ການກວດກາດ້ານວິຊາການ ແມ່ນ ການກວດກາໂດຍກະຊວງການເງິນ ຊຶ່ງມີ ດັ່ງນີ້:

1. ການກວດກາເອກະສານ;
2. ການກວດກາທັນທີ.

**ມາດຕາ 94 (ໃໝ່) ການກວດກາເອກະສານ**

ກະຊວງການເງິນ ຕ້ອງດຳເນີນການກວດກາເອກະສານ ຢ່າງຕໍ່ເນື່ອງ ດ້ວຍການເກັບກຳ ແລະ ວິເຄາະບົດລາຍງານ, ເອກະສານ ແລະ ຂໍ້ມູນ ກ່ຽວກັບການເຄື່ອນໄຫວຂອງຜູ້ປະກັນໄພ ພ້ອມທັງກວດກາຄວາມຖືກຕ້ອງຂອງຂໍ້ມູນ ແລະ ປະເມີນສະພາບ, ລັກສະນະຄວາມສ່ຽງ ແລະ ການຄວບຄຸມພາຍໃນຂອງຜູ້ປະກັນໄພ.

**ມາດຕາ 95 (ໃໝ່) ການກວດກາຮອດທີ່**

ເຈົ້າໜ້າທີ່ປະກັນໄພ ຕ້ອງດຳເນີນການກວດກາຮອດທີ່ ຢູ່ຫ້ອງການຂອງຜູ້ປະກັນໄພ ກ່ຽວກັບການເຄື່ອນໄຫວ, ສະພາບພາຍໃນຕົວຈິງ ແລະ ການຮັກສາຄວາມໝັ້ນຄົງຂອງຜູ້ປະກັນໄພ.

ການກວດກາຮອດທີ່ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການດຳເນີນທຸລະກິດໂດຍທົ່ວໄປ;
2. ການຈັດຕັ້ງປະຕິບັດລະບຽບການຮັກສາຄວາມໝັ້ນຄົງຂອງຜູ້ປະກັນໄພ;
3. ຄວາມສ່ຽງ, ການບໍລິຫານຄວາມສ່ຽງ ແລະ ລະບົບຄວບຄຸມພາຍໃນ;
4. ການແກ້ໄຂຂໍ້ຄົງຄ້າງຂອງຜູ້ປະກັນໄພ ໃນການຈັດຕັ້ງປະຕິບັດຄຳແນະນຳ ທີ່ໄດ້ກຳນົດໄວ້ໃນຜົນການກວດກາຄັ້ງຜ່ານມາ.

ພາຍຫຼັງສຳເລັດການກວດກາຮອດທີ່ ເຈົ້າໜ້າທີ່ປະກັນໄພ ຕ້ອງສົ່ງບົດສະຫຼຸບການກວດກາຮອດທີ່ ໃຫ້ກະຊວງການເງິນ ແລະ ສະພາບໍລິຫານຂອງຜູ້ປະກັນໄພ ທີ່ຖືກກວດກາ.

**ມາດຕາ 96 (ໃໝ່) ເຈົ້າໜ້າທີ່ປະກັນໄພ**

ເຈົ້າໜ້າທີ່ປະກັນໄພ ແມ່ນ ພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງການເງິນ ໃຫ້ປະຕິບັດໜ້າທີ່ ກ່ຽວກັບການກວດກາວຽກງານປະກັນໄພ.

ເຈົ້າໜ້າທີ່ປະກັນໄພ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າໄປສະຖານທີ່ຂອງຜູ້ປະກັນໄພ ໃນໂມງລັດຖະການ ໂດຍບໍ່ຕ້ອງແຈ້ງລ່ວງໜ້າ ແລະ ສາມາດຮຽກເອົາຂໍ້ມູນຕ່າງໆຂອງຜູ້ປະກັນໄພ ເປັນຕົ້ນ ຫຼັກຊັບ, ປຶ້ມບັນທຶກ, ບົດບັນທຶກ, ບັນຊີເງິນຝາກ ແລະ ເອກະສານອື່ນທີ່ກ່ຽວຂ້ອງ;
2. ກວດກາຈຸດຕ່າງໆຂອງຜູ້ປະກັນໄພ ເພື່ອຊອກຫາ ເງິນ, ຫຼັກຊັບ, ປຶ້ມບັນທຶກ, ບົດບັນທຶກ, ບັນຊີເງິນຝາກ ແລະ ເອກະສານອື່ນທີ່ກ່ຽວຂ້ອງ;
3. ເປີດ ຫຼື ສັ່ງໃຫ້ເປີດ ຕູ້ເກັບເງິນ (ຕູ້ເຊັບ) ຫຼື ຕູ້ຄອນເທນເນີ ທີ່ສົງໄສວ່າ ຈະເປັນບ່ອນເກັບມ້ຽນເງິນ, ຫຼັກຊັບ, ປຶ້ມບັນທຶກ, ບົດບັນທຶກ, ບັນຊີເງິນຝາກ ແລະ ເອກະສານອື່ນທີ່ກ່ຽວຂ້ອງຂອງຜູ້ປະກັນໄພ;
4. ກວດສອບ ແລະ ສຳເນົາເອກະສານ ກ່ຽວກັບ ຫຼັກຊັບ, ປຶ້ມບັນທຶກ, ບົດບັນທຶກ, ບັນຊີເງິນຝາກ ແລະ ເອກະສານອື່ນທີ່ກ່ຽວຂ້ອງຂອງຜູ້ປະກັນໄພ ແລະ ເຮັດລາຍການລະອຽດ ກ່ອນຍົກຍ້າຍສິ່ງຂອງດັ່ງກ່າວ ເພື່ອດຳເນີນການກວດສອບ;
5. ໃຫ້ຜູ້ປະກັນໄພ ອະທິບາຍຂໍ້ມູນ ທີ່ໄດ້ບັນທຶກລົງໃນ ປຶ້ມບັນທຶກ, ບົດບັນທຶກ, ບັນຊີເງິນຝາກ ແລະ ເອກະສານອື່ນທີ່ກ່ຽວຂ້ອງ;
6. ບັນທຶກລາຍການລະອຽດ ສຳລັບການຍຶດຫຼັກຊັບ, ປຶ້ມບັນທຶກ, ບົດບັນທຶກ, ບັນຊີເງິນຝາກ ແລະ ເອກະສານອື່ນທີ່ກ່ຽວຂ້ອງຂອງຜູ້ປະກັນໄພ ທີ່ຈະເປັນຫຼັກຖານ ກ່ຽວກັບການລະເມີດ ຫຼື ການປະຕິບັດທີ່ບໍ່ຖືກຕ້ອງ;
7. ເກັບຮັກສາສິ່ງຂອງທີ່ຍຶດນັ້ນ ໄວ້ຕະຫຼອດໄລຍະເວລາການດຳເນີນຄະດີ;
8. ສະຫຼຸບ, ລາຍງານຜົນການກວດກາ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ໃນການກວດການັ້ນ ເຈົ້າໜ້າທີ່ປະກັນໄພ ຈະດຳເນີນຢັ້ງຢືນຖານ ຄຳໃຫ້ການຂອງຜູ້ປະກັນໄພ ແລະ ບຸກຄົນອື່ນ ທີ່ມີສ່ວນພົວພັນ ຫຼື ເຄີຍພົວພັນກັບ ຜູ້ປະກັນໄພ ບໍ່ວ່າທາງກົງ ຫຼື ທາງອ້ອມ ແລະ ຕ້ອງເກັບຮັກສາບົດບັນທຶກຄຳໃຫ້ການຂອງບຸກຄົນນັ້ນໄວ້ ເພື່ອເປັນຫຼັກຖານ.

ບຸກຄົນດັ່ງກ່າວ ຕ້ອງສະໜອງຂໍ້ມູນກ່ຽວກັບຫຼັກຊັບ, ປຶ້ມບັນທຶກ, ບົດບັນທຶກ, ບັນຊີເງິນຝາກ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ພ້ອມທັງສາຍພົວພັນຂອງຕົນກັບຜູ້ປະກັນໄພ ເມື່ອເຈົ້າໜ້າທີ່ປະກັນໄພ ຫາກຕ້ອງການ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 97 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 98 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ປະກັນໄພ ແລະ ຜູ້ຊື້ປະກັນໄພ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 99 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 100 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຜູ້ປະກັນໄພ ທີ່ດຳເນີນທຸລະກິດປະກັນໄພ ກ່ອນກົດໝາຍສະບັບນີ້ ຕ້ອງປັບປຸງໃຫ້ສອດຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ພາຍໃນເວລາ ສາມປີ ນັບແຕ່ວັນທີ່ກົດໝາຍສະບັບນີ້ ມີຜົນສັກສິດ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການປະກັນໄພ ສະບັບເລກທີ 06/ສພຊ, ລົງວັນທີ 21 ທັນວາ 2011.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້